**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເລກທີ 002 ປປທ

ລົງວັນທີ 17 ມິຖຸນາ 2021

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 19 ມີນາ 2021 ແລະ ສະບັບເລກທີ 06/ຄປຈ, ລົງວັນທີ 15 ມິຖຸນາ 2021.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ລັດຖະບັນຍັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການກຳນົດຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງຂະແໜງການລັດ ເພື່ອຄຸ້ມຄອງການຈັດເກັບ ຄ່າທຳນຽມ ແລະ ຄ່າບໍລິການຢ່າງລວມສູນ ແລະ ຈັດຕັ້ງປະຕິບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ, ແນໃສ່ຮັບປະກັນໃຫ້ຄ່າທຳນຽມ ແລະ ຄ່າບໍລິການ ໄດ້ມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນ ຕາມກຳນົດເວລາ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ.

### ມາດຕາ 2 ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແມ່ນຄ່າສິດຄຸ້ມຄອງບໍລິຫານລັດ ທີ່ເກັບເປັນເງິນຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມ ໂດຍຜ່ານຂະແໜງການຂອງລັດ ດ້ວຍການຢັ້ງຢືນ ແລະ/ຫຼື ອະນຸຍາດ;

ຄ່າບໍລິການ ແມ່ນຄ່າບໍລິຫານທາງດ້ານວິຊາການ ທີ່ເກັບເປັນເງິນຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃນການໃຊ້ບໍລິການ ຂອງຂະແໜງການລັດ ໃນການເຄື່ອນໄຫວຮັບໃຊ້ສັງຄົມ ໂດຍບໍ່ຫວັງຜົນກຳໄລ ແລະ ເປັນການຊ່ວຍໜູນການໃຊ້ຈ່າຍງົບປະມານຂອງລັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນລັດຖະບັນຍັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ແຈ້ງຄ່າທຳນຽມ ແລະ ຄ່າບໍລິການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງລັດ ທີ່ຕ້ອງແຈ້ງຄ່າທຳນຽມ ແລະ ຄ່າບໍລິການ ຕໍ່ຂະແໜງການລັດ ຫຼື ນິຕິບຸກຄົນ ທີ່ມີໜ້າທີ່ຮັບຜິດຊອບຄຸ້ມຄອງ ເພື່ອຂໍເອກະສານຢັ້ງຢືນມູນຄ່າ ຄ່າທຳນຽມ ແລະ/ຫຼື ຄ່າບໍລິການ ທີ່ຕ້ອງມອບເຂົ້າລັດ;
2. ຜູ້ມອບຄ່າທຳນຽມ ແລະ ຄ່າບໍລິການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງລັດ ທີ່ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ເພື່ອຂໍອອກໃບຢັ້ງຢືນ ແລະ ໃບອະນຸຍາດ ແລະ ການບໍລິການຈາກຂະແໜງການລັດ;
3. ຜູ້ເກັບຄ່າທຳນຽມ ໝາຍເຖິງ ການຈັດຕັ້ງທີ່ມີສິດ ແລະ ຄວາມຮັບຜິດຊອບ ເກັບຄ່າທຳນຽມ;
4. ຜູ້ເກັບຄ່າບໍລິການ ໝາຍເຖິງ ຂະແໜງການລັດ ແລະ/ຫຼື ນິຕິບຸກຄົນ ຖືກມອບໝາຍໃຫ້ເກັບຄ່າບໍລິການ.

**ມາດຕາ 4 ຫຼັກການ ການກຳນົດຄ່າທຳນຽມ ແລະ ຄ່າບໍລິການ**

ການກຳນົດ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບລະດັບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
2. ຄຸ້ມຄອງການຈັດເກັບ ແລະ ມອບເຂົ້າງົບປະມານແຫ່ງລັດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຈັດເກັບ ແລະ ນຳໃຊ້ໃຫ້ ຖືກຕ້ອງ, ຄົບຖ້ວນ ຕາມກົດໝາຍ, ໂປ່ງໃສ ແລະ ກວດສອບໄດ້;
4. ສະດວກ, ວ່ອງໄວ, ທັນສະໄໝ, ທັນຕາມກຳນົດເວລາ ແລະ ມີປະສິດທິຜົນ.

**ມາດຕາ 5 ການຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າທຳນຽມ ແລະ ຄ່າບໍລິການ**

ການຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ປະຕິບັດ ດັ່ງນີ້:

1. ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ຕາມກົດໝາຍໄດ້ກຳນົດ;
3. ຕາມມະຕິຂອງສະພາແຫ່ງຊາດ ສຳລັບວຽກງານ ທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ບົນພື້ນຖານການສະເໜີ ຂອງລັດຖະບານ;
4. ຕາມລາຍການຍົກເວັ້ນ ທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້.

**ມາດຕາ 6 ຂອບເຂດການນຳໃຊ້**

ລັດຖະບັນຍັດສະບັບນີ້ ນຳໃຊ້ສຳລັບການເກັບຄ່າທຳນຽມ ແລະ ຄ່າບໍລິການຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ສິດຄຸ້ມຄອງບໍລິຫານລັດ ແລະ/ຫຼື ນຳໃຊ້ການບໍລິການທາງດ້ານວິຊາການ ຈາກຂະແໜງການລັດ ຂອງ ສປປ ລາວ.

# ພາກທີ II
# ສິດ ແລະ ຄວາມຮັບຜິດຊອບ
# ຂອງອົງການລັດ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ
## ໝວດທີ 1
## ຄວາມຮັບຜິດຊອບຂອງອົງການລັດ

**ມາດຕາ 7 ອົງການລັດທີ່ມີສິດກຳນົດຄ່າທຳນຽມ ແລະ ຄ່າບໍລິການ**

ອົງການລັດທີ່ມີສິດກຳນົດຄ່າທຳນຽມມີດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ;
2. ລັດຖະບານ.

ອົງການທີ່ມີສິດກຳນົດຄ່າບໍລິການມີດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ;
2. ລັດຖະບານ;
3. ກະຊວງການເງິນ;
4. ບັນດາກະຊວງ ແລະ ອົງການທຽບເທົ່າ;
5. ສະພາປະຊາຊົນຂັ້ນແຂວງ;
6. ອົງການປົກຄອງຂັ້ນແຂວງ.

**ມາດຕາ 8 ສິດ ແລະ ຂອບເຂດຄວາມຮັບຜິດຊອບຂອງອົງການລັດ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ**

ອົງການລັດທີ່ມີສິດ ແລະ ຄວາມຮັບຜິດຊອບກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ມີດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ ອັດຕາ, ລາຍການຈັດເກັບ, ການຍົກເວັ້ນ ແລະ ການປ່ຽນແປງຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງການຂັ້ນສູນກາງ ຕາມການສະເໜີຂອງລັດຖະບານ ເພື່ອສະເໜີປະທານປະເທດຕົກລົງ;
2. ລັດຖະບານ ຄົ້ນຄວ້າ ອັດຕາ, ລາຍການຈັດເກັບ, ການຍົກເວັ້ນ ແລະ ການປ່ຽນແປງຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງການຂັ້ນສູນກາງ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ;
3. ກະຊວງການເງິນ ເປັນເສນາທິການໃຫ້ລັດຖະບານໃນການຄົ້ນຄວ້າ, ສັງລວມອັດຕາ, ລາຍການຈັດເກັບ ແລະ ການຍົກເວັ້ນ ຄ່າທຳນຽມ ແລະ ຄ່າບໍລິການ; ອອກລະບຽບການຄຸ້ມຄອງກົນໄກການຈັດເກັບ, ແຈ້ງ-ມອບ ແລະ ນຳໃຊ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ບັນດາຂະແໜງການ;
4. ບັນດາກະຊວງ ແລະ ອົງການທຽບເທົ່າ ຄົ້ນຄວ້າ ອັດຕາ, ລາຍການຈັດເກັບ, ລະບຽບການຍົກເວັ້ນ ຫຼື ຫຼຸດຜ່ອນ ຄ່າທຳນຽມ ແລະ ຄ່າບໍລິການ ແລ້ວນຳສະເໜີກະຊວງການເງິນ ເພື່ອສັງລວມສະເໜີຕໍ່ລັດຖະບານ;
5. ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາ ອັດຕາ, ລາຍການຈັດເກັບ, ການຍົກເວັ້ນ ແລະ ການປ່ຽນແປງຄ່າບໍລິການ ກ່ຽວກັບການອະນາໄມຕົວເມືອງ, ໄຟປະດັບຕົວເມືອງ, ສິ່ງແວດລ້ອມຕົວເມືອງ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ ເພື່ອສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງຕົກລົງ, ແຕ່ບໍ່ມີສິດຕົກລົງຄ່າທຳນຽມ ແລະ ຄ່າບໍລິການອື່ນ;
6. ອົງການປົກຄອງຂັ້ນແຂວງ ຄົ້ນຄວ້າອັດຕາ, ລາຍການຈັດເກັບ, ການຍົກເວັ້ນ ແລະ ການປ່ຽນແປງຄ່າບໍລິການ ກ່ຽວກັບການອະນາໄມຕົວເມືອງ, ໄຟປະດັບຕົວເມືອງ, ສິ່ງແວດລ້ອມຕົວເມືອງ ເພື່ອນຳ

ສະເໜີສະພາປະຊາຊົນຂັ້ນແຂວງພິຈາລະນາຮັບຮອງ ລາຍການເກັບຄ່າບໍລິການດັ່ງກ່າວ ຕ້ອງຖືກບັນຈຸເຂົ້າໃນແຜນງົບປະມານທ້ອງຖິ່ນ, ແຕ່ບໍ່ມີສິດສະເໜີຄ່າທຳນຽມ ແລະ ຄ່າບໍລິການອື່ນ.

ອົງການລັດທີ່ຮັບຜິດຊອບເກັບຄ່າທຳນຽມ ແລະ ຄ່າບໍລິການມີສິດ ແລະ ໜ້າທີ່ ໂຄສະນາເຜີຍແຜ່ ແລະ ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການແຈ້ງ, ການມອບ ແລະ ການນຳໃຊ້

**ມາດຕາ 9 ການແຈ້ງຄ່າທານຽມ ແລະ ຄ່າບໍລິການ**

ການແຈ້ງຄ່າທຳນຽມ ແລະ ຄ່າບໍລິການ ດາເນີນເປັນ ເດືອນ, ງວດ, ປີ ຫຼື ເປັນແຕ່ລະຄັ້ງ ຕາມການກຳນົດຂອງອົງການຄຸ້ມຄອງ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ກ່ຽວຂ້ອງ.

ຜູ້ແຈ້ງ ມີໜ້າທີ່ແຈ້ງ ຄ່າທຳນຽມ ແລະ ຄ່າບໍລິການ ຕາມກຳນົດເວລາ.

**ມາດຕາ 10 ການມອບຄ່າທານຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ຕ້ອງມອບ ເຂົ້າງົບປະມານແຫ່ງລັດ ຢ່າງລວມສູນໂດຍຜ່ານລະບົບທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ ຫຼື ລະບົບຄັງເງິນແຫ່ງຊາດ. ສຳລັບຂະແໜງການທີ່ມີຄວາມຈຳເປັນມີເງິນສົດແຮຄັງ ເພື່ອຮັບໃຊ້ວຽກງານວິຊາສະເພາະ ຕ້ອງປະຕິບັດຕາມລະບຽບການສະເພາະທີ່ກະຊວງການເງິນວາງອອກ.

ຜູ້ມອບ ມີໜ້າທີ່ມອບ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາ ເປັນສະກຸນເງິນກີບ ດ້ວຍເງິນສົດ, ແຊັກ, ເງິນໂອນ ຫຼື ຮູບການອື່ນ ຕາມກົດໝາຍວ່າດ້ວຍລະບົບການຊຳລະ, ຍົກເວັ້ນ ບາງກໍລະນີ ທີ່ໄດ້ກຳນົດໄວ້ໃນສັນຍາ ທີ່ໄດ້ຕົກລົງໃຫ້ຊຳລະເປັນສະກຸນເງິນຕາຕ່າງປະເທດ, ແຕ່ຕ້ອງບັນທຶກເປັນລາຍຮັບງົບປະມານ ເປັນສະກຸນເງິນກີບ ບົນພື້ນຖານອັດຕາແລກປ່ຽນທີ່ທະນາຄານ ແຫ່ງ ສປປ ລາວ ປະກາດໃຊ້.

ຂັ້ນຕອນ, ຮູບການ ແລະ ວິທີການມອບຄ່າທຳນຽມ ແລະ ຄ່າບໍລິການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ການນາໃຊ້ຄ່າທານຽມ ແລະ ຄ່າບໍລິການ**

ການນຳໃຊ້ຄ່າທຳນຽມ ແລະ ຄ່າບໍລິການ ຂອງບັນດາຂະແໜງການ ຕ້ອງລວມສູນຢູ່ໃນລະບົບງົບປະມານແຫ່ງລັດ ໂດຍມີການໄລ່ລຽງລາຍຮັບ, ລາຍຈ່າຍ, ສັງລວມເຂົ້າໃນແຜນງົບປະມານແຫ່ງລັດປະຈຳປີຂອງຂະແໜງການ, ປະຕິບັດຕາມລະບຽບການເງິນແຫ່ງລັດ ແລະ ພາຍໃຕ້ການຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການການເງິນ.

ສຳລັບຂະແໜງການເປົ້າໝາຍ ທີ່ຈະຫັນເປັນຫົວໜ່ວຍ ບໍລິຫານວິຊາການກຸ້ມຕົນເອງ ດ້ານງົບປະ ມານສາມາດນຳໃຊ້ລາຍຮັບທີ່ເກັບມານັ້ນ ເຂົ້າໃນການເຄື່ອນໄຫວວຽກງານ ຂອງຂະແໜງການຕົນ ໂດຍອີງໃສ່ຈຸດພິເສດ ຂອງຂະແໜງການດັ່ງກ່າວ ຕາມລະບຽບການ ທີ່ກະຊວງການເງິນວາງອອກ.

# ພາກທີ III
## ການຄຸ້ມຄອງ ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 12 ການຄຸ້ມຄອງລາຍຮັບຄ່າທານຽມ ແລະ ຄ່າບໍລິການ**

ລັດຖະບານ ເປັນຜູ້ຄຸ້ມຄອງລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້ ໂດຍມອບໃຫ້ກະຊວງການເງິນຄຸ້ມຄອງການຈັດເກັບ ແລະ ຕ້ອງມອບເຂົ້າໃນລະບົບບັນຊີຄັງເງິນແຫ່ງຊາດ ຢ່າງລວມສູນ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ ໂດຍນຳໃຊ້ລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ (**TaxRIS**) ແລະ ຊຳລະຜ່ານລະບົບທະນາຄານ.

ກະຊວງການເງິນ ແລະ ບັນດາຂະແໜງການ ດຳເນີນການຍັ້ງຢືນ ແລະ ສົມທຽບການຈັດຕັ້ງປະຕິບັດການຈັດເກັບລາຍຮັບ ຄ່າທຳນຽມ ແລະ ຄ່າບໍລິການ.

ລາຍຮັບຈາກຄ່າບໍລິການ ຂອງບັນດາຂະແໜງການ ຕ້ອງຄິດໄລ່ ແລະ ສັງລວມເຂົ້າໃນແຜນງົບປະມານປະຈຳປີ ຂອງແຕ່ລະຂະແໜງການ, ປະຕິບັດຕາມລະບຽບການເງິນແຫ່ງລັດ ແລະ ພາຍໃຕ້ການຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການການເງິນ. ສຳລັບຄ່າບໍລິການ ທີ່ຕິດພັນກັບກອງທຶນລັດ ໃຫ້ປະຕິບັດຕາມລະບຽບການສະເພາະຂອງກອງທຶນ.

**ມາດຕາ 13 ການຄຸ້ມຄອງລາຍຈ່າຍ ຄ່າທຳນຽມ ແລະ ຄ່າບໍລິການ**

ລັດຖະບານ ມອບໃຫ້ກະຊວງການເງິນ ກຳນົດ ຂັ້ນຕອນ, ຮູບການ ແລະ ວິທີການນຳໃຊ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ລາຍລະອຽດກ່ຽວກັບວົງເງິນການໃຊ້ຈ່າຍ ຂອງຂະແໜງການທີ່ຈະມີສິດໃຊ້ຈ່າຍ.

ຂະແໜງການກ່ຽວຂ້ອງ ຕ້ອງສະຫຼຸບລາຍງານປະຈຳປີກ່ຽວກັບ ການນຳໃຊ້ລາຍຮັບຄ່າບໍລິການດັ່ງກ່າວເພື່ອລາຍງານຂະແໜງການເງິນ. ຖ້າຫາກນຳໃຊ້ບໍ່ໝົດຕ້ອງໄດ້ມອບ ແລະ ສົ່ງຄືນເຂົ້າງົບປະມານແຫ່ງລັດ.

# ພາກທີ IV
## ຄ່າທຳນຽມ ແລະ ຄ່າບໍລິການ ຂົງເຂດເສດຖະກິດ
## ໝວດທີ 1
## ຂະແໜງການ ແຜນການ ແລະ ການລົງທຶນ

**ມາດຕາ 14 ຄ່າທຳນຽມ**

ຄ່າທຳນຽມ ຂະແໜງການ ແຜນການ ແລະ ການລົງທຶນ ໃຫ້ຈັດເກັບ ດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ອັດຕາ (ກີບ) |
|---|---|---|
| 1 | ເອກະສານຢັ້ງຢືນການປ່ຽນແປງພື້ນຖານນິຕິກຳ ເຊັ່ນ: ເອກະສານດັດແກ້ໃບອະນຸຍາດລົງທຶນ, ການປ່ຽນອຳນວຍການ, ການປ່ຽນແປງທີ່ຕັ້ງ, ການປ່ຽນແປງຂາຮຸ້ນ, ເພີ່ມ ຫຼື ຫຼຸດ ທຶນຈົດທະບຽນ ແລະ ໃບຢັ້ງຢືນອື່ນໆ | 50.000 |
| 2 | ໃບອະນຸຍາດລົງທຶນ, ໃບອະນຸຍາດທຸລະກິດພາຍໃນ ໄປລົງທຶນຕ່າງປະເທດ, ໃບອະນຸຍາດຫ້ອງການຕາງໜ້າ, ໃບສົ່ງເສີມການລົງທຶນ | 200.000 |
| 3 | ໃບຢັ້ງຢືນຮັບຮອງແຜນນຳເຂົ້າປະຈຳປີ, ຢັ້ງຢືນແຜນນຳເຂົ້າເພີ່ມເຕີມ | 50.000 |
| 4 | ໜັງສືຂໍອະນຸຍາດເອກະສານຄ້ຳປະກັນ(IM8) ເອົາສິນຄ້າອອກຈາກດ່ານ | 50.000 |

| | | |
|---|---|---|
| 5 | ໜັງສືສິ້ນສຸດອາຍຸການໃຫ້ນະໂຍບາຍຕໍ່ພາຫະນະ ທີ່ຍົກເວັ້ນພາສີ, ອາກອນ ນໍາເຂົ້າ | 50.000 |
| 6 | ໜັງສືຕໍ່ອາຍຸການນໍາເຂົ້າຊົ່ວຄາວ ສໍາລັບພາຫະນະ ແລະ ອຸປະກອນຕ່າງໆ ທີ່ ໄດ້ຮັບນະໂຍບາຍນໍາເຂົ້າຊົ່ວຄາວ | 50.000 |
| 7 | ໜັງສືອະນຸຍາດນໍາອອກຄືນ ສໍາລັບ ພາຫະນະ ແລະ ອຸປະກອນຕ່າງໆ ທີ່ໄດ້ ຮັບນະໂຍບາຍນໍາເຂົ້າຊົ່ວຄາວ | 50.000 |

**ມາດຕາ 15 ຄ່າບໍລິການ**

ຄ່າບໍລິການ ຂະແໜງການ ແຜນການ ແລະ ການລົງທຶນ ໃຫ້ຈັດເກັບ ດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ອັດຕາ (ກີບ) |
|---|---|---|
| 1 | ແບບພິມໃບຄໍາຮ້ອງຂໍລົງທຶນ | 50.000 |
| 2 | ແບບພິມເອກະສານບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສໍາປະທານ | 500.000 |
| 3 | ຂໍ້ມູນການລົງທຶນ | 50.000 |
| 4 | ການອອກໃບທະບຽນວິສາຫະກິດ, ໃບຢັ້ງຢືນຕົວເລກອາກອນ, ເຮັດກາປະທັບ, ເຮັດບັດພັກເຊົາ ແລະ ວິຊາທຸລະກິດ | 50.000 |

## ໝວດທີ 2
## ຂະແໜງການ ການເງິນ

**ມາດຕາ 16 ຄ່າທໍານຽມ**

ຄ່າທໍານຽມ ຂະແໜງການ ການເງິນໃຫ້ຈັດເກັບ ດັ່ງນີ້::

1. ຄ່າທໍານຽມ ການຈົດທະບຽນເອກະສານ

ການຈົດທະບຽນເອກະສານ ແມ່ນການຈົດເນື້ອໃນຫຍໍ້ ຂອງເອກະສານເຂົ້າໃນປຶ້ມທະບຽນ ເພື່ອຈຸດປະສົງເກັບກໍາຂໍ້ມູນສະຖິຕິການເຄື່ອນໄຫວ ທາງດ້ານເສດຖະກິດ-ສັງຄົມ, ເຮັດໃຫ້ເອກະສານມີຄຸນຄ່າທາງດ້ານກົດໝາຍ, ຮັບປະກັນການປົກປັກຮັກສາ ແລະ ສໍາເນົາເອກະສານ ເພື່ອເປັນຖານຂໍ້ມູນ, ສ້າງລາຍຮັບເຂົ້າງົບປະມານ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

ບັນດາເອກະສານ ທີ່ຈະຈົດທະບຽນຢູ່ຂະແໜງການເງິນ ຕ້ອງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ: ເອກະສານທີ່ພົວພັນລະຫວ່າງລັດ ແລະ ເອກະຊົນທີ່ນໍາໃຊ້ງົບປະມານຂອງລັດ, ເງິນຊ່ວຍເຫຼືອລ້າ, ເງິນກູ້ຢືມພາຍໃນ ແລະ ຕ່າງປະເທດ, ສັນຍາລະຫວ່າງບໍລິສັດ, ລັດວິສາຫະກິດ ຫຼື ວິສາຫະກິດລັດຖືຮຸ້ນຮ່ວມກັບບຸກຄົນ, ນິຕິບຸກຄົນເອກະຊົນ ຫຼື ສັນຍາ ລະຫວ່າງ ເອກະຊົນກັບເອກະຊົນ.

1.1. ຄ່າທໍານຽມຈົດທະບຽນເອກະສານ ເກັບອັດຕາດຽວ 50.000 ກີບ/ຄັ້ງ ຕາມລາຍການ ດັ່ງນີ້:

1) ໜັງສືມອບກໍາມະສິດສືບທອດມູນມໍຣະດົກ (ສັງຫາລິມະຊັບ);
2) ການເລື່ອນເວລາໃຊ້ໜີ້ສິນ ຫຼື ສືບຕໍ່ຄໍ້າປະກັນ (ສັງຫາລິມະຊັບ);
3) ເອກະສານອື່ນໆທີ່ບໍ່ຈໍາເປັນຕ້ອງຈົດທະບຽນ ແຕ່ຜູ້ກ່ຽວນໍາມາຈົດທະບຽນ (ສັງຫາລິມະຊັບ);
4) ບົດບັນທຶກແບ່ງປັນທຶນຂອງບໍລິສັດທີ່ຖືກຍຸບ ໃຫ້ແກ່ຂາຮຸ້ນ;
5) ບົດບັນທຶກແບ່ງປັນຊັບ ລະຫວ່າງຜູ້ມີກໍາມະສິດຮ່ວມ;
6) ສັນຍາຊື້-ຂາຍ ສັດ ຫຼື ຜົນຜະລິດກະສິກໍາທຸກປະເພດ;
7) ກົດລະບຽບຂອງບໍລິສັດ;
8) ສັນຍາຮັບໃຊ້ໜີ້;

9) ສັນຍາຊອດຈຳ ສັງຫາລິມະຊັບ;

10) ການດັດແກ້ສັນຍາ;

11) ໜັງສືມອບພັນທະໃຫ້ກັນ ເພື່ອປະຕິບັດກິດຈະກຳຕ່າງໆ ແທນຕົນ;

12) ການຄ້ຳປະກັນດ້ວຍຊັບເຄື່ອນທີ່;

13) ໜັງສືຕົກລົງແບ່ງປັນສິນສົມສ້າງ.

1.2. ຄ່າທຳນຽມຈົດທະບຽນແບບເດັດຖານຕາມມູນຄ່າຊັບ

| ລ/ດ | ເນື້ອໃນລາຍການ | ເຊົ່າສຳປະທານ (ກີບ) | ເຊົ່າສຳປະທານຕໍ່ (ກີບ) |
|---|---|---|---|
| 1 | ສັນຍາໃຫ້ເຊົ່າ-ສຳປະທານ ແລະ ໃຫ້ຜູ້ອື່ນເຊົ່າ-ສຳປະທານຕໍ່ກ່ຽວກັບສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ບໍ່ຕິດພັນກັບທີ່ດິນ ເກັບຄ່າຈົດທະບຽນແບບເດັດຖານຕາມມູນຄ່າຊັບ | | |
| 1.1 | ແຕ່ 200.000 ຫາ 2.000.000 ກີບ | 50.000 | 40.000 |
| 1.2 | ຫຼາຍກວ່າ 2.000.000 ຫາ 10.000.000 ກີບ | 70.000 | 50.000 |
| 1.3 | ຫຼາຍກວ່າ 10.000.000 ຫາ 50.000.000 ກີບ | 100.000 | 60.000 |
| 1.4 | ຫຼາຍກວ່າ 50.000.000 ຫາ 100.000.000 ກີບ | 200.000 | 100.000 |
| 1.5 | ຫຼາຍກວ່າ 100.000.000 ຫາ 250.000.000 ກີບ | 300.000 | 200.000 |
| 1.6 | ຫຼາຍກວ່າ 250.000.000 ຫາ 500.000.000 ກີບ | 400.000 | 300.000 |
| 1.7 | ຫຼາຍກວ່າ 500.000.000 ຂຶ້ນໄປ | 500.000 | 400.000 |
| 2 | ສັນຍາໃຫ້ສຳປະທານ ເພື່ອຂຸດຄົ້ນ, ສຳຫຼວດ, ຂຸດຄົ້ນຊັບພະຍາກອນແຮ່ທາດ, ຄ່າຊັບພະຍາກອນເຄື່ອງປ່າຂອງດົງ, ຄ່າຊັບພະຍາກອນນ້ຳທຳມະຊາດ ເພື່ອຮັບໃຊ້ໂຄງການເຂື່ອນໄຟຟ້ານ້ຳຕົກ, ຄ່າຊັບພະຍາກອນທຳມະຊາດສຳລັບແຕ່ທຸລະກິດ ແລະ ບໍລິການ. | | |
| 2.1 | ແຕ່ 400.000.000 ກີບລົງມາ | 600.000 | 1.000.000 |
| 2.2 | ຫຼາຍກວ່າ 400.000.000 ຫາ 2 ຕື້ກີບ | 3.000.000 | 5.000.000 |
| 2.3 | ຫຼາຍກວ່າ 2 ຫາ 10 ຕື້ກີບ | 15.000.000 | 25.000.000 |
| 2.4 | ຫຼາຍກວ່າ 10 ຕື້ກີບຂຶ້ນໄປ | 30.000.00 | 50.000.000 |
| 3 | ການໂອນກຳມະສິດ | | |
| 3.1 | ສັນຍາຊື້-ຂາຍພາຫະນະຕໍ່ຄັນ, ອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກຕ່າງໆ ທີ່ຊື້ເຂົ້າມາໃໝ່ | | |
| - | ແຕ່ 5.000.000 ກີບ ລົງມາ | | 50.000 |
| - | ຫຼາຍກວ່າ 5.000.000 ຫາ 10.000.000 ກີບ | | 100.000 |
| - | ຫຼາຍກວ່າ 10.000.000 ຫາ 50.000.000 ກີບ | | 250.000 |
| - | ຫຼາຍກວ່າ 50.000.000 ຫາ 100.000.000 ກີບ | | 500.000 |
| - | ຫຼາຍກວ່າ 100.000.000 ຫາ 300.000.000 ກີບ | | 1.000.000 |
| - | ຫຼາຍກວ່າ 300.000.000 ກີບ ຂຶ້ນໄປ | | 2.000.000 |
| 3.2 | ສັນຍາຊື້-ຂາຍ ພາຫະນະຕໍ່ຄັນ, ອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ເຄື່ອງຈັກປະເພດຕ່າງໆ ທີ່ຊື້ເຂົ້າມາ ແລະ ນຳໃຊ້ ຢູ່ ສປປ ລາວ ແລ້ວ, ການຊື້-ຂາຍແຮ່ທາດ, ເຄື່ອງປ່າຂອງດົງ, ຖ່ານໄມ້, ການຊື້-ຂາຍໄມ້ທ່ອນ, ໄມ້ກິ່ງງ່າ, ຕໍໄມ້ (ເຫງົ້າໄມ້), ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ, ສັນຍາຊື້-ຂາຍເພື່ອແປຮູບຮັບໃຊ້ພາຍໃນປະເທດ | | |
| - | ແຕ່ 5.000.000 ກີບ ລົງມາ | | 50.000 |

| | | | |
|---|---|---|---|
| - | ຫຼາຍກວ່າ 5.000.000 ຫາ 10.000.000 ກີບ | | 100.000 |
| - | ຫຼາຍກວ່າ 10.000.000 ຫາ 50.000.000 ກີບ | | 500.000 |
| - | ຫຼາຍກວ່າ 50.000.000 ຫາ 100.000.000 ກີບ | | 1.000.000 |
| - | ຫຼາຍກວ່າ 100.000.000 ຫາ 300.000.000 ກີບ | | 2.000.000 |
| - | ຫຼາຍກວ່າ 300.000.000 ຫາ 1 ຕື້ ກີບ | | 3.000.000 |
| - | ຫຼາຍກວ່າ 1 ຕື້ ກີບ ຂຶ້ນໄປ | | 4.000.000 |
| 4 | ສັນຍາໂອນຮຸ້ນ ເຂົ້າເປັນທຶນວິສາຫະກິດ ພາຫະນະ, ເຄື່ອງຈັກ, ເປັນເງິນ ຫຼື ວັດຖຸ ແລະ ອຸປະກອນ ເຄື່ອງໃຊ້ ຊຶ່ງບໍ່ແມ່ນທີ່ດິນ | | |
| 4.1 | ແຕ່ 10.000.000 ກີບ ລົງມາ | | 50.000 |
| 4.2 | ຫຼາຍກວ່າ 10.000.000 ຫາ 50.000.00 ກີບ | | 100.000 |
| 4.3 | ຫຼາຍກວ່າ 50.000.000 ຫາ 100.000.000 ກີບ | | 150.000 |
| 4.4 | ຫຼາຍກວ່າ 100.000.000 ກີບ ຂຶ້ນໄປ | | 200.000 |
| 5 | ສັນຍາຮ່ວມປະກອບທຶນ ເພື່ອດຳເນີນທຸລະກິດປະເພດຕ່າງໆ | | |
| 5.1 | ມູນຄ່າແຕ່ 400.000.000 ກີບ ລົງມາ | | 200.000 |
| 5.2 | ມູນຄ່າຫຼາຍກວ່າ 400.000.000 ກີບ ຂຶ້ນໄປ | | 500.000 |
| 6 | ສັນຍາປະເພດຕ່າງໆ | | |

| ລ/ດ | ເນື້ອໃນລາຍການ | ແຕ່ 10 ລ້ານກີບ ລົງມາ | ຫຼາຍກວ່າ 10-50 ລ້ານກີບ | ຫຼາຍກວ່າ 50-100 ລ້ານກີບ | ຫຼາຍກວ່າ 100 ລ້ານກີບ ຂຶ້ນໄປ |
|---|---|---|---|---|---|
| | | ອັດຕາ (ກີບ) | | | |
| 6.1 | ສັນຍາກູ້ຢືມເງິນ ຫຼື ຊັບສິ່ງຂອງ | 30.000 | 40.000 | 50.000 | 100.000 |
| 6.2 | ໜັງສືໂອນໜີ້ສິນ | 40.000 | 50.000 | 100.000 | 200.000 |
| 6.3 | ສັນຍາມອບ-ໂອນ ຫຼື ໂອນກິດຈະການ, ສັນຍາການຄ້າພາຍໃນ ແລະ ຕ່າງປະເທດ, ສັນຍາການຄ້າກັບຕ່າງປະ ເທດ, ສັນຍາການຜະລິດ, ສັນຍາການບໍລິການ ແລະ ສັນຍາການຂາຍຮຸ້ນ | 30.000 | 50.000 | 100.000 | 200.000 |
| 6.4 | ສັນຍາປະກັນໄພ | 20.000 | 30.000 | 40.000 | 100.000 |
| 6.5 | ສັນຍາຄ້ຳປະກັນອະສັງຫາລິມະສັບ ແລະ ສັງຫາລິມະສັບ ຫຼື ບຸກຄົນ ທີ່ບໍ່ຕິດພັນກັບທີ່ດິນ | 20.000 | 30.000 | 40.000 | 50.000 |

| | | | |
|---|---|---|---|
| 7 | ສັນຍາຮັບເໝົາ, ອອກແບບ, ສ້ອມແປງຕຶກອາຄານ, ຕິດຕາມກວດກາກໍ່ສ້າງ, ທີ່ປຶກສາໂຄງການ, ສັນຍາຕັດເຄື່ອງ ແລະ ບໍລິການຕ່າງໆ, ສັນຍາສ້ອມແປງພາຫະນະພັດສະດຸ, ສັນຍາຂາຍນ້ຳມັນ, ບໍລິການຄົ້ນຄວາມຖີ່ ແລະ ອື່ນໆ. | | |
| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |

| | | | |
|---|---|---|---|
| 1 | ແຕ່ 500.000 ກີບ ລົງມາ | ຄັ້ງ | 30.000 |
| 2 | ຫຼາຍກວ່າ 500.000 ຫາ 5.000.000 ກີບ | ຄັ້ງ | 50.000 |
| 3 | ຫຼາຍກວ່າ 5.000.000 ຫາ 25.000.000 ກີບ | ຄັ້ງ | 60.000 |
| 4 | ຫຼາຍກວ່າ 25.000.000 ຫາ 50.000.000 ກີບ | ຄັ້ງ | 70.000 |
| 5 | ຫຼາຍກວ່າ 50.000.000 ຫາ 100.000.000 ກີບ | ຄັ້ງ | 100,000 |
| 6 | ຫຼາຍກວ່າ 100.000.000 ຫາ 250.000.000 ກີບ | ຄັ້ງ | 250.000 |
| 7 | ຫຼາຍກວ່າ 250.000.000 ຫາ 500.000.000 ກີບ | ຄັ້ງ | 500.000 |
| 8 | ຫາຍກວ່າ 500.000.000 ຫາ 1 ຕື້ ກີບ | ຄັ້ງ | 1.000.000 |
| 9 | ຫຼາຍກວ່າ 1 ຫາ 3 ຕື້ ກີບ | ຄັ້ງ | 2.000.000 |
| 10 | ຫຼາຍກວ່າ 3 ຫາ 5 ຕື້ ກີບ | ຄັ້ງ | 4.000.000 |
| 11 | ຫຼາຍກວ່າ 5 ຫາ 10 ຕື້ ກີບ | ຄັ້ງ | 7.000.000 |
| 12 | ຫຼາຍກວ່າ 10 ຫາ 25 ຕື້ ກີບ | ຄັ້ງ | 17.750.000 |
| 13 | ຫຼາຍກວ່າ 25 ຫາ 50 ຕື້ ກີບ | ຄັ້ງ | 37.500.000 |
| 14 | ຫຼາຍກວ່າ 50 ຫາ 100 ຕື້ ກີບ | ຄັ້ງ | 75.000.000 |
| 15 | ຫຼາຍກວ່າ 100 ຫາ 150 ຕື້ ກີບ | ຄັ້ງ | 90.000.000 |
| 16 | ຫຼາຍກວ່າ 150 ຕື້ ກີບ ຂຶ້ນໄປ | ຄັ້ງ | 95.000.000 |

2. ຄ່າທຳນຽມ ຂໍ້ມູນຂ່າວສານການເງິນ

| | | | |
|---|---|---|---|
| 1 | ໃບຢັ້ງຢືນ ມາດຕະຖານເຕັກການເຊື່ອມຕໍ່ຂໍ້ມູນ ທາງດ້ານພື້ນຖານໂຄງລ່າງເຄືອຂ່າຍ ແລະ ຊຸດຄຳສັ່ງຫາຖານຂໍ້ມູນລວມສູນ ຂອງກະຊວງການເງິນ | ປີ | 500.000 |
| 2 | ຄ່າທຳນຽມ ສະມາຊິກໃນການນຳໃຊ້ລະບົບຖານຂໍ້ມູນລວມຂອງກະຊວງການເງິນ | ປີ | 250.000 |

3. ຄ່າທຳນຽມ ການບັນຊີ

| | | | |
|---|---|---|---|
| 1 | ໃບອະນຸຍາດ ດຳເນີນທຸລະກິດບັນຊີ ຫຼື ກວດສອບ | ຄັ້ງ | 500.000 |
| 2 | ໃບອະນຸຍາດ ໂປຣແກຣມບັນຊີ ທີ່ພັດທະນາຂຶ້ນ ເພື່ອຊົມໃຊ້ເອງ:<br>- ສຳລັບຫົວໜ່ວຍຖືບັນຊີແຫ່ງລັດ<br>- ສຳລັບຫົວໜ່ວຍຖືບັນຊີວິສາຫະກິດ | ຄັ້ງ | <br>500.000<br>500.000 |
| 3 | ໃບອະນຸຍາດ ໂປຣແກຣມບັນຊີ ພັດທະນາຂຶ້ນ ເພື່ອຈັດຈຳໜ່າຍ | ຄັ້ງ | 500.000 |
| 4 | ໃບອະນຸຍາດນັກກວດສອບຕາມກົດໝາຍ | ຄັ້ງ | 200.000 |
| 5 | ໃບອະນຸຍາດ ປ່ຽນແປງການນຳໃຊ້ມາດຕະຖານ ການລາຍງານການເງິນ ແລະ ປ່ຽນແປງປີການບັນຊີ | ຄັ້ງ | 500.000 |
| ໝາຍເຫດ: ການເກັບຄ່າທຳນຽມອອກອະນຸຍາດຕ່າງໆ ແມ່ນເກັບຄັ້ງດຽວຕະຫຼອດການດຳເນີນທຸລະກິດ. | | | |

4. ຄ່າທຳນຽມນ້ຳມັນເຊື້ອໄຟ

| ລ/ດ | **ເນື້ອໃນລາຍການ** |
|---|---|

| | | |
|---|---|---|
| 1 | ນ້ຳມັນແອັດຊັງພິເສດ | ອີງຕາມໂຄງສ້າງລາຄານ້ຳມັນເຊື້ອໄຟແຕ່ລະໄລຍະ |
| 2 | ນ້ຳມັນແອັດຊັງທຳມະດາ | |
| 3 | ນ້ຳມັນກາຊວນ | |

5. ຄ່າທຳນຽມຂຶ້ນບັນຊີ ແລະ ລຶບລ້າງພາຫະນະຂອງ ວິສາຫະກິດລັດລົງທຶນ ແລະ ປະກັນໄພ

| ລ/ດ | ມູນຄ່າ (ກີບ) | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ແຕ່ 20.000.000 ກີບ ລົງມາ | ຄັ້ງ | 20.000 |
| 2 | ຫຼາຍກວ່າ 20.000.000 ຫາ 40.000.000 ກີບ | ຄັ້ງ | 40.000 |
| 3 | ຫຼາຍກວ່າ 40.000.000 ຫາ 80.000.000 ກີບ | ຄັ້ງ | 80.000 |
| 4 | ຫຼາຍກວ່າ 80.000.000 ຫາ 120.000.000 ກີບ | ຄັ້ງ | 120.000 |
| 5 | ຫຼາຍກວ່າ 120.000.000 ຫາ 140.000.000 ກີບ | ຄັ້ງ | 140.000 |
| 6 | ຫຼາຍກວ່າ 140.000.000 ຫາ 160.000.000 ກີບ | ຄັ້ງ | 160.000 |
| 7 | ຫຼາຍກວ່າ 160.000.000 ຫາ 180.000.000 ກີບ | ຄັ້ງ | 180.000 |
| 8 | ຫຼາຍກວ່າ 180.000.000 ຫາ 200.000.000 ກີບ | ຄັ້ງ | 200.000 |
| 9 | ຫຼາຍກວ່າ 200.000.000 ຫາ 220.000.000 ກີບ | ຄັ້ງ | 220.000 |
| 10 | ຫຼາຍກວ່າ 220.000.000 ຫາ 240.000.000 ກີບ | ຄັ້ງ | 240.000 |
| 11 | ຫຼາຍກວ່າ 240.000.000 ຫາ 260.000.000 ກີບ | ຄັ້ງ | 260.000 |
| 12 | ຫຼາຍກວ່າ 260.000.000 ຫາ 300.000.000 ກີບ | ຄັ້ງ | 300.000 |
| 13 | ຫຼາຍກວ່າ 300.000.000 ຫາ 500.000.000 ກີບ | ຄັ້ງ | 500.000 |
| 14 | ຫຼາຍກວ່າ 500.000.000 ກີບ ຂຶ້ນໄປ | ຄັ້ງ | 1.000.000 |

6. ຄ່າທຳນຽມ ສ່ວຍສາອາກອນ

| | | | |
|---|---|---|---|
| 1 | ຄ່າທຳນຽມອອກໃບອະນຸຍາດນຳໃຊ້ໃບເກັບເງິນສະເພາະ | ຄັ້ງ | 50.000 |
| 2 | ຄ່າສະແຕັມອາກອນ | | |
| 2.1 | ສະແຕັມຕິດໃບຄຳຮ້ອງ, ໃບສະເໜີ, ໃບສຳເນົາ, ໃບຢັ້ງຢືນ, ໃບແຈ້ງເກີດ, ໃບແຕ່ງດອງ, ໃບອະນຸ ຍາດ, ໃບບັນທຶກ, ໃບສຳມະໂນຄົວ, ໃບສືບທອດມູນມໍຣະດົກໃບມອບກຳມະສິດ, ທຸກພາຫະນະທີ່ບໍ່ມີກົນຈັກ, ສຳເນົາຄຳຕັດສິນຂອງສານໃຫ້ຄູ່ກໍລະນີ, ໃບຢັ້ງຢືນ ຫຼື ໃບອະນຸຍາດຕ່າງໆ ກ່ຽວກັບສັດລ້ຽງທີ່ໄດ້ຂຶ້ນທະບຽນແລ້ວ | ດວງ | 5.000 |
| 2.2 | ໃບໜັງສືຊື້-ຂາຍ, ປຶ້ມຕິດຕາມການແຈ້ງເສຍອາກອນ, ກົດລະບຽບຂອງວິສາຫະກິດ ຫຼື ບໍລິສັດ, ໃບມອບສິດໃຫ້ເປັນຜູ້ຕາງໜ້າຂອງຕົນຄັ້ງດຽວ ຫຼື ຫຼາຍຄັ້ງ | ດວງ | 10.000 |
| 2.3 | ສະແຕັມຕິດສັນຍາ ລະຫວ່າງຫຼາຍຝ່າຍ ຢູ່ພາຍໃນປະເທດ,ໃບມອບກຳມະສິດຊັບເຄື່ອນທີ່ (ພາຫະນະກົນຈັກທຸກປະເທດ) | ດວງ | 15.000 |
| 2.4 | ສະແຕັມຕິດສັນຍາ ລະຫວ່າງຫຼາຍຝ່າຍ ຢູ່ ສປປ ລາວ ກັບຕ່າງປະເທດ,ໃບໜັງສືຊື້-ຂາຍ, ໃບສືບທອດມູນມໍລະດົກ, ໃບມອບກຳມະສິດຊັບຄົງທີ່ (ທີ່ດິນເຄຫາສະຖານ ແລະ ສິ່ງປຸກສ້າງອື່ນໆ), ໃບຮຸ້ນ, ປຶດບັນທຶກຕົກລົງແບ່ງປັນຜົນກຳໄລ ແກ່ຜູ້ຖືຮຸ້ນ | ດວງ | 20.000 |
| 2.5 | ສະແຕັມຕິດໃບຢັ້ງຢືນກຳມະສິດທີ່ດິນ ແລະ ເຮືອນ | ດວງ | 25.000 |

| | | | |
|---|---|---|---|
| 2.6 | ສະແຕັມຕິດໃບຢ່າຮ້າງ | ດວງ | 100.000 |

**ມາດຕາ 17 ຄ່າບໍລິການ**

ຄ່າບໍລິການ ຂະແໜງການ ການເງິນ ໃຫ້ຈັດເກັບ ດັ່ງນີ້:

1. ຄ່າບໍລິການ ຄຸ້ມຄອງຊັບສິນຂອງລັດ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ຂຶ້ນບັນຊີ, ຂຶ້ນທະບຽນ, ເຄື່ອນຍ້າຍ ແລະ ລຶບລ້າງຊັບສິນຂອງລັດ | ຄັນ | 20.000 |
| 2 | ເຮັດສັນຍາຊື້-ຂາຍ, ສັນຍາມອບ-ໂອນ, ອອກໃບຢັ້ງ ຢືນ, ໜັງສືແຈ້ງຕອບ ແລະ ອື່ນໆ | ຊຸດ | 50.000 |
| 3 | ແກ້ໄຂຂໍ້ຂັດແຍ່ງການນໍາໃຊ້ຊັບສິນຂອງລັດ | ຄັ້ງ | 50.000 |
| 4 | ໝີບກົ່ວໄມ້ ແລະ ແຮ່ທາດສົ່ງອອກ | ຈຸດ | 20.000 |
| 5 | ແບບພິມຕ່າງໆ | ຊຸດ | 10.000 |

2. ຄ່າບໍລິການ ການບັນຊີ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ຄົ້ນຄວ້າ ອອກໃບຕິດຕາມ ການດຳເນີນທຸລະກິດບັນຊີ ຫຼື ທຸລະກິດກວດສອບ | ຄັ້ງ | 100.000 |
| 2 | ຄົ້ນຄວ້າອອກໃບຕິດຕາມການນໍາໃຊ້ ໂປຣແກຣມບັນຊີ | ຄັ້ງ | 100.000 |
| 3 | ຄົ້ນຄວ້າອອກໃບອະນຸຍາດ ນັກກວດສອບຕາມກົດໝາຍ | ຄັ້ງ | 100.000 |
| 4 | ຄົ້ນຄວ້າການປ່ຽນແປງການນໍາໃຊ້ ມາດຕະຖານລາຍງານການເງິນ ແລະ ປ່ຽນແປງປີການບັນຊີ | ຄັ້ງ | 100.000 |
| 5 | ຄົ້ນຄວ້າການໃຫ້ຄໍາປຶກສາ ລະບຽບການບັນຊີ | ຄັ້ງ | 100.000 |
| 6 | ຄົ້ນຄວ້າອອກໃບຕິດຕາມ ການຖືບັນຊີ | ຄັ້ງ | 100.000 |
| <u>ໝາຍເຫດ:</u> ການເກັບຄ່າບໍລິການ ແລະ ຄ່າແບບພິມ ຂອງວຽກງານບັນຊີແມ່ນເກັບເທື່ອໜຶ່ງຕໍ່ຄັ້ງການໃຫ້ບໍລິການ. | | | |

3. ຄ່າບໍລິການ, ຄ່າແບບພິມ, ສະແຕັມ ແລະ ຂໍ້ມູນສະຖິຕິ.

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ແຈ້ງພາສີຜ່ານລະບົບປະຕູດຽວ | ຊຸດ | 120.000 |
| 2 | ອອກບັດອະນຸຍາດແຈ້ງພາສີ | ບັດ | 100.000 |
| 3 | ແຈ້ງຜ່ານລະບົບຄຸ້ມຄອງຂໍ້ມູນການແຈ້ງພາສີ ASYCUDA | ຊຸດ | 100.000 |
| 4 | ຢັ້ງຢືນຮັບຮອງລ່ວງໜ້າ (Advance Ruling) | ຄັ້ງ | 100.000 |
| 5 | ສິນຄ້າຜ່ານແດນສາກົນ | ຄັນ | 575.000 |
| 6 | ແບບພິມສະຕິກເກີ້ ສໍາລັບພາຫະນະຂົນສົ່ງສິນຄ້າ ເຂົ້າມາພາຍໃນປະເທດ (ລະບົບບໍ 53) | ຊຸດ | 150.000 |
| 7 | ກວດກາສິນຄ້າຜ່ານລະບົບສາຍແສງ (Scanner) | ຄັນຄັ້ງ | 350.000 |
| 8 | ໃບແຈ້ງພາສີສໍາລັບພາຫະນະນໍາເຂົ້າທ່ອງທ່ຽວຢ້ຽມຢາມ, ຂົນສົ່ງສິນຄ້າ (ລະບົບ D53) | ຊຸດ | 15.000 |
| 9 | ນໍາໃຊ້ລະບົບຄຸ້ມຄອງການເຄື່ອນຍ້າຍພາຍໃນ (T1) | ຊຸດ | 50.000 |
| 10 | ນໍາໃຊ້ລະບົບຄຸ້ມຄອງແຜນນໍາເຂົ້າ (Master List) | ຄັ້ງ | 200.000 |
| 11 | ນໍາໃຊ້ລະບົບ GPS | ຄັນ/ຖ້ຽວ | 50.000 |

| | | | |
|---|---|---|---|
| 12 | ໃບຢັ້ງຢືນການເສຍພາສີສຳລັບລົດເປັນຄັນ CBU, ລົດປະກອບ IKD (ບໍ 9) | ໃບ | 5.000 |
| 13 | ແບບພິມໃບແຈ້ງພາສີເປັນລາຍລະອຽດ ແລະ ໃບກວດປ່ອຍສິນຄ້າ | ໃບ | 1.500 |
| 14 | ແບບພິມໃບເຄື່ອນຍ້າຍນ້ຳມັນເຊື້ອໄຟ (ບໍ 88) | ໃບ | 500 |
| 15 | ແບບພິມໃບແຈ້ງເສຍພາສີສິນຄ້າຍ່ອຍ (ອອກ-ເຂົ້າ) | ໃບ | 5.000 |
| 16 | ສາຍລ໋ອກຕູ້ສິນຄ້າ (Customs Seal) | ເສັ້ນ | 15.000 |
| 17 | ສາຍລ໋ອກຕູ້ສິນຄ້າເອເລັກໂຕຣນິກ (Customs E-seal) | ເສັ້ນ | 50.000 |
| 18 | ສະແຕັມເສຍພາສີ | ດວງ | 500 |
| 19 | ສະແຕັມປອດພາສີ | ດວງ | 1.000 |
| 20 | ຂໍ້ມູນສະຖິຕິ ສິນຄ້ານຳເຂົ້າ ເພື່ອຊົມໃຊ້ (ນອກຈາກນ້ຳມັນເຊື້ອໄຟ ແລະ ອາຍແກັສ) | ໂຕນ | 2.000 |

4. ຄ່າບໍລິການ ແບບພິມຄັງເງິນແຫ່ງຊາດ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ |
|---|---|---|---|
| 1 | ເປີດບັນຊີເງິນຝາກ | ກີບ/ຄັ້ງ | 10.000 |
| 2 | ປິດບັນຊີເງິນຝາກ | | |
| 1.1 | ເງິນກີບ | ກີບ/ຄັ້ງ | 100.000 |
| 1.2 | ເງິນບາດໄທ | ບາດ/ຄັ້ງ | 500 |
| 1.3 | ເງິນໂດລາ ສະຫະລັດ | ໂດລາ/ຄັ້ງ | 20 |
| 3 | ວີຊາແຊັກຄັງເງິນ (ຍົກເວັ້ນວີຊາແຊັກມອບລາຍຮັບງົບປະມານແຫ່ງລັດ) | ກີບ/ຄັ້ງ | 10.000 |
| 4 | ພິມບັນຊີສຳຮອງປີປັດຈຸບັນ | ກີບ/ໃບ | 5.000 |
| 5 | ພິມບັນຊີສຳຮອງ ຍ້ອນຫຼັງປີຜ່ານມາ | ກີບ/ບັນຊີ/ປີ | 100.000 |
| 6 | ແລກປ່ຽນແຊັກທະນາຄານ (ຍົກເວັ້ນຄ່າມອບລາຍຮັບງົບປະມານແຫ່ງລັດ) | ກີບ/ໃບ | 15.000 |
| 7 | ໂອນບັນຊີພາຍໃນ | ກີບ/ຄັ້ງ | 10.000 |
| 8 | ແບບຟອມລາຍເຊັນເປີດບັນຊີເງິນຝາກຄັງເງິນ | ກີບ/ບັນຊີ | 20.000 |
| 9 | ຂາຍແຊັກຄັງເງິນ (1 ຫົວ ມີ 25 ໃບ) | ກີບ/ຫົວ | 25.000 |
| 10 | ແບບພິມໃບຮັບເງິນມອບລາຍຮັບງົບປະມານຜ່ານລະບົບທະນາຄານ (1 ຫໍ່ ມີ 1.000 ໃບ) | ກີບ/ຫໍ່ | 120.000 |

5. ຄ່າບໍລິການແບບຟອມ ຂຶ້ນບັນຊີ ແລະ ລົບລ້າງບັນຊີພາຫະນະຂອງວິສາຫະກິດລັດລົງທຶນ

| | | | |
|---|---|---|---|
| 5.1 | ຄ່າບໍລິການແບບຟອມ | | |
| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
| 1 | ແບບຟອມຂຶ້ນບັນຊີພາຫະນະ | ຊຸດ/ຄັນ | 20.000 |
| 2 | ແບບຟອມລົບລ້າງບັນຊີພາຫະນະ | ຊຸດ/ຄັນ | 20.000 |
| 5.2 | ຄ່າບໍລິການ ຂຶ້ນບັນຊີພາຫະນະ | | |
| 1 | ຂຶ້ນບັນຊີພາຫະນະ ປະເພດລົດ 2 ລໍ້ | ຊຸດ/ຄັນ | 30.000 |

| | | | |
|---|---|---|---|
| 2 | ຂົ້ນບັນຊີພາຫະນະ ປະເພດລົດ 4 ລໍ້ຂຶ້ນໄປ | ຊຸດ/ຄັນ | 50.000 |
| 5.3 | ຄ່າບໍລິການລົບລ້າງອອກຈາກບັນຊີພາຫະນະ | | |
| 1 | ລົບລ້າງອອກຈາກບັນຊີພາຫະນະ ປະເພດລົດ 2 ລໍ້ | ຄັນ | 30.000 |
| 2 | ລົບລ້າງບັນຊີພາຫະນະ ປະເພດລົດ 4 ລໍ້ຂຶ້ນໄປ | ຄັນ | 50.000 |

6. ຄ່າບໍລິການ ແບບພິມ ສ່ວຍສາອາກອນ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນ (ອອກເລກ Tin) | ໃບ | 50.000 |
| 2 | ປຶ້ມຕິດຕາມການມອບອາກອນ | ຫົວ | 30.000 |
| | ໃບຕິດຕາມການມອບອາກອນ | ຫົວ | 20.000 |
| 3 | ໃບຢັ້ງຢືນການມອບພັນທະອາກອນ | ໃບ | 40.000 |
| 4 | ກວດຜ່ານບົດລາຍງານການເງິນປະຈຳປີ | ປີ | 50.000 |
| 5 | ຄົ້ນຄວ້າເອກະສານ ແລະ ຮ່າງສັນຍາຕ່າງໆ | ຄັ້ງ | 30.000 |
| 6 | ເອກະສານຂໍຍົກເວັ້ນຫຼຸດຜ່ອນອາກອນປະເພດຕ່າງໆ | ຄັ້ງ | 50.000 |
| 7 | ເອກະສານໃຫ້ຄວາມກະຈ່າງແຈ້ງເປັນລາຍລັກອັກສອນດ້ານນິຕິກຳ ສ່ວຍສາອາກອນຕໍ່ວິສາຫະກິດ | ຄັ້ງ | 50.000 |
| 8 | ແບບພິມໃບຄຳຮ້ອງຂໍເລກປະຈຳຕົວຜູ້ເສຍອາກອນ | ຊຸດ | 25.000 |
| 9 | ແບບພິມໃບຄຳຮ້ອງຂໍໃບຢັ້ງຢືນການມອບພັນທະປະຈຳປີ | ຊຸດ | 50.000 |
| 10 | ແບບພິມໃບສະເໜີຂໍອະນຸຍາດນຳໃຊ້ໃບເກັບເງິນ | ຊຸດ | 5.000 |
| 11 | ການອອກໃບຢັ້ງຢືນການມອບອາກອນລາຍໄດ້ບຸກຄົນ | ໃບ | 30.000 |
| 12 | ອອກໃບຕິດຕາມການມອບອາກອນ (ຕິດຕາມຜູ້ຮັບເໝົາຊ່ວງຕໍ່) | ໃບ | 50.000 |
| 13 | ແບບພິມສະແຕັມອາກອນຢາສູບທຸກປະເພດ ທີ່ສຳເລັດຮູບເປັນ ຊອງ (20 ກອກ/ຊອງ) ແລະ ຢາຊີກາ | ດວງ | 500 |

7. ຄ່າບໍລິການ ຂໍ້ມູນຂ່າວສານການເງິນ

| | | | |
|---|---|---|---|
| 1 | ຄຸ້ມຄອງ ແລະ ຕິດຕາມການນຳໃຊ້ ລະບົບເຊື່ອມຕໍ່ຖານຂໍ້ມູນລວມ ສູນ ຂອງກະຊວງການເງິນ | ປີ | 300.000 |
| 2 | ໃຫ້ຄຳປຶກສາ, ອອກແບບ, ພັດທະນາ ແລະ ຄຸ້ມຄອງລະບົບເຕັກໂນ ໂລຊີຂ່າວສານການເງິນ | ຄັ້ງ | 100.000 |
| 3 | ເປີດໃຊ້ບໍລິການ ລະບົບບັນຊີຄຸ້ມຄອງງົບປະມານຂອງລັດ ID/ຜູ້ໃຊ້ | ຜູ້ໃຊ້ | 300.000 |
| 4 | ສ້ອມແປງ ແລະ ແກ້ໄຂບັນຫາຄອມພິວເຕີ, ຊຸດຄຳສັ່ງໂປຣແກຣມ ປ້ອງກັນໄວຣັສ ແລະ ອຸປະກອນອື່ນໆ | ຄັ້ງ | 100.000 |

**ມາດຕາ 18 ເອກະສານຕ່າງໆ ທີ່ຍົກເວັ້ນຄ່າທຳນຽມ ແລະ ສະແຕັມອາກອນ**

1. ເອກະສານ ທີ່ຍົກເວັ້ນການຕິດສະແຕັມອາກອນ

- ໃບສະເໜີທີ່ພົວພັນ ລະຫວ່າງອົງການຈັດຕັ້ງຂອງລັດຂັ້ນຕ່າງໆ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາສະໜາ, ໃບແຈ້ງເສຍອາກອນ, ໃບສັ່ງມອບອາກອນຂອງວິສາຫະກິດ, ໃບແຈ້ງເສຍພາສີຂາອອກ-ຂາເຂົ້າ;

- ສັນຍາກູ້ຢືມເງິນ ທີ່ເຊັນກັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ, ສະຖາບັນການເງິນ ຫຼື ທະນາຄານຕ່າງປະເທດ;
- ໃບຈໍາໜ່າຍສິນຄ້າເຄື່ອງຂອງ ແລະ ການບໍລິການໃຫ້ແກ່ພາກສ່ວນລັດບໍລິຫານ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນອື່ນ ຢູ່ ສປປ ລາວ;
- ໃບຮຸ້ນຂອງລັດຖະບານ, ໃບຢັ້ງຢືນການສອບເສັງ.

2. ເອກະສານທີ່ຍົກເວັ້ນຄ່າທໍານຽມຈົດທະບຽນ

- ເອກະສານໂອນກໍາມະສິດນໍາໃຊ້ທຸກປະເພດໃຫ້ແກ່ລັດຖະບານ, ສະຖານທູດ ຫຼື ອົງການຈັດຕັ້ງສາກົນທີ່ຕັ້ງ ຢູ່ ສປປ ລາວ ເມື່ອມີສັນຍາຍົກເວັ້ນຄ່າທໍານຽມຈົດທະບຽນຊຶ່ງກັນ ແລະ ກັນ (ໂດຍການຕົກລົງເຫັນດີ ຂອງລັດຖະມົນຕີກະຊວງການເງິນ);
- ສັນຍາຊ່ວຍເຫຼືອ, ກູ້ຢືມລະຫວ່າງລັດຖະບານລາວ ກັບຕ່າງປະເທດ ຫຼື ອົງການຈັດຕັ້ງອື່ນ, ໜັງສືກ່ຽວກັບການຊື້ທີ່ດິນ-ເຮືອນເອກະຊົນ ມາເປັນຂອງລັດ, ໜັງສືທີ່ລັດເປັນຜູ້ເສຍຄ່າທໍານຽມຈົດທະບຽນ ແມ່ນຍົກເວັ້ນ.

## ໝວດທີ 3
## ຂະແໜງການ ອຸດສາຫະກໍາ ແລະ ການຄ້າ

**ມາດຕາ 19 ຄ່າທໍານຽມ**

ຄ່າທໍານຽມ ຂະແໜງການ ອຸດສາຫະກໍາ ແລະ ການຄ້າ ໃຫ້ຈັດເກັບ ດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| I | ຄ່າທໍານຽມ ອອກໃບທະບຽນວິສາຫະກິດ ໃຫ້ເກັບຕາມຂະໜາດ ຂອງທຶນຈົດທະບຽນ | | |
| 1 | ແຕ່ 1.000.000 ຫາ 10.000.000 ກີບ | ຄັ້ງ | 20.000 |
| 2 | ຫຼາຍກວ່າ 10.000.000 ຫາ 20.000.000 ກີບ | ຄັ້ງ | 50.000 |
| 3 | ຫຼາຍກວ່າ 20.000.000 ຫາ 50.000.000 ກີບ | ຄັ້ງ | 100.000 |
| 4 | ຫຼາຍກວ່າ 50.000.000 ຫາ 100.000.000 ກີບ | ຄັ້ງ | 300.000 |
| 5 | ຫຼາຍກວ່າ 100.000.000 ຫາ 400.000.000 ກີບ | ຄັ້ງ | 500.000 |
| 6 | ຫຼາຍກວ່າ 400.000.000 ຫາ 1 ຕື້ ກີບ | ຄັ້ງ | 1.000.000 |
| 7 | ຫຼາຍກວ່າ 1 ຫາ 10 ຕື້ ກີບ | ຄັ້ງ | 2.600.000 |
| 8 | ຫຼາຍກວ່າ 10 ຫາ 20 ຕື້ ກີບ | ຄັ້ງ | 4.000.000 |
| 9 | ຫຼາຍກວ່າ 20 ຕື້ ກີບ | ຄັ້ງ | 6.000.000 |
| II | ຄ່າທໍານຽມ ອອກໃບອະນຸຍາດດໍາເນີນທຸລະກິດ | | |
| | ການອອກໃບອະນຸຍາດດໍາເນີນທຸລະກິດ, ດັດແກ້ ຫຼື ອອກໃບອະນຸຍາດດໍາເນີນທຸລະກິດ ຄືນໃໝ່ ໃນກິດຈະການອຸດສາຫະກໍາ ແລະ ການຄ້າ ທີ່ຕ້ອງຂໍອະນຸຍາດດໍາເນີນທຸລະກິດ. | ຄັ້ງ | 50.000 |
| III | ຄ່າທໍານຽມອອກໃບຢັ້ງຢືນດໍາເນີນກິດຈະການໂຮງງານ | | |
| 1 | ການອອກໃບຢັ້ງຢືນດໍາເນີນກິດຈະການໂຮງງານ ຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານ, ຂະຫຍາຍກິດຈະການໂຮງງານ ແລະ ຍົກຍ້າຍໂຮງງານ ໃຫ້ປະຕິບັດອັດຕາດຽວກັນ ໂດຍເກັບຕາມຂະໜາດໂຮງງານ | | |

| | | | |
|---|---|---|---|
| 1.1 | ໃຊ້ກຳມະກອນແຕ່ 10-25 ຄົນ ຫຼື ໃຊ້ເຄື່ອງຈັກຕ່ຳກວ່າ 10 ແຮງມ້າ | ຄັ້ງ | 20.000 |
| 1.2 | ໃຊ້ກຳມະກອນແຕ່ 26 ຄົນຂຶ້ນໄປ ຫຼື ໃຊ້ເຄື່ອງຈັກຕ່ຳກວ່າ 10 ແຮງມ້າ | ຄັ້ງ | 33.000 |
| 1.3 | ໃຊ້ເຄື່ອງຈັກແຕ່ 10 ຂຶ້ນໄປ ແຕ່ບໍ່ເຖິງ 20 ແຮງມ້າ | ຄັ້ງ | 40.000 |
| 1.4 | ໃຊ້ເຄື່ອງຈັກແຕ່ 20 ຂຶ້ນໄປ ແຕ່ບໍ່ເຖິງ 50 ແຮງມ້າ | ຄັ້ງ | 65.000 |
| 1.5 | ໃຊ້ເຄື່ອງຈັກແຕ່ 50 ຂຶ້ນໄປ ແຕ່ບໍ່ເຖິງ 100 ແຮງມ້າ | ຄັ້ງ | 130.000 |
| 1.6 | ໃຊ້ເຄື່ອງຈັກແຕ່ 100 ຂຶ້ນໄປ ແຕ່ບໍ່ເຖິງ 200 ແຮງມ້າ | ຄັ້ງ | 190.000 |
| 1.7 | ໃຊ້ເຄື່ອງຈັກແຕ່ 200 ຂຶ້ນໄປ ແຕ່ບໍ່ເຖິງ 300 ແຮງມ້າ | ຄັ້ງ | 260.000 |
| 1.8 | ໃຊ້ເຄື່ອງຈັກແຕ່ 300 ຂຶ້ນໄປ ແຕ່ບໍ່ເຖິງ 400 ແຮງມ້າ | ຄັ້ງ | 320.000 |
| 1.9 | ໃຊ້ເຄື່ອງຈັກແຕ່ 400 ຂຶ້ນໄປ ແຕ່ບໍ່ເຖິງ 600 ແຮງມ້າ | ຄັ້ງ | 450.000 |
| 1.10 | ໃຊ້ເຄື່ອງຈັກແຕ່ 600 ຂຶ້ນໄປ ແຕ່ບໍ່ເຖິງ 800 ແຮງມ້າ | ຄັ້ງ | 650.000 |
| 1.11 | ໃຊ້ເຄື່ອງຈັກແຕ່ 800 ຂຶ້ນໄປ ແຕ່ບໍ່ເຖິງ 1.000 ແຮງມ້າ | ຄັ້ງ | 970.000 |
| 1.12 | ໃຊ້ເຄື່ອງຈັກແຕ່ 1.000 ຂຶ້ນໄປ ແຕ່ບໍ່ເຖິງ 2.000 ແຮງມ້າ | ຄັ້ງ | 1.250.000 |
| 1.13 | ໃຊ້ເຄື່ອງຈັກແຕ່ 2.000 ຂຶ້ນໄປ ແຕ່ບໍ່ເຖິງ 3.000 ແຮງມ້າ | ຄັ້ງ | 1.500.000 |
| 1.14 | ໃຊ້ເຄື່ອງຈັກແຕ່ 3.000 ຂຶ້ນໄປ ແຕ່ບໍ່ເຖິງ 4.000 ແຮງມ້າ | ຄັ້ງ | 1.750.000 |
| 1.15 | ໃຊ້ເຄື່ອງຈັກແຕ່ 4.000 ຂຶ້ນໄປ ແຕ່ບໍ່ເຖິງ 5.000 ແຮງມ້າ | ຄັ້ງ | 2.000.000 |
| 1.16 | ໃຊ້ເຄື່ອງຈັກແຕ່ 5.000 ຂຶ້ນໄປ ແຕ່ບໍ່ເຖິງ 6.000 ແຮງມ້າ | ຄັ້ງ | 2.200.000 |
| 1.17 | ໃຊ້ເຄື່ອງຈັກແຕ່ 6.000 ຂຶ້ນໄປ ແຕ່ບໍ່ເຖິງ 7.000 ແຮງມ້າ | ຄັ້ງ | 2.400.000 |
| 1.18 | ໃຊ້ເຄື່ອງຈັກແຕ່ 7.000 ຂຶ້ນໄປ ແຕ່ບໍ່ເຖິງ 8.000 ແຮງມ້າ | ຄັ້ງ | 2.600.000 |
| 1.19 | ໃຊ້ເຄື່ອງຈັກແຕ່ 8.000 ຂຶ້ນໄປ ແຕ່ບໍ່ເຖິງ 9.000 ແຮງມ້າ | ຄັ້ງ | 2.800.000 |
| 1.20 | ໃຊ້ເຄື່ອງຈັກແຕ່ 9.000 ຂຶ້ນໄປ ແຕ່ບໍ່ເຖິງ 10.000 ແຮງມ້າ | ຄັ້ງ | 3.000.000 |
| 1.21 | ໃຊ້ເຄື່ອງຈັກແຕ່ 10.000 ແຮງມ້າຂຶ້ນໄປ | ຄັ້ງ | 3.200.000 |
| 2 | ການອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ສະບັບປ່ຽນແທນ ກໍລະນີໃບຢັ້ງຢືນດຳເນີນກິດຈະ ການໂຮງງານເສຍຫາຍ, ເປື້ອນ ຫຼື ຖືກທຳລາຍ | ຄັ້ງ | 100.000 |
| 3 | ການອອກໃບຢັ້ງຢືນດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທີ່ໃຊ້ກຳມະກອນຕ່ຳກວ່າ 10 ຄົນ ຫຼື ເຄື່ອງຈັກຕ່ຳກວ່າ 10 ແຮງມ້າ | ຄັ້ງ | 15.000 |
| 4 | ການຂຶ້ນທະບຽນທາດເຄມີ (ເກັບຄັ້ງດຽວຕໍ່ໜຶ່ງເທື່ອທີ່ອອກທະບຽນ) | ທາດ | 25.000 |
| IV | ຄ່າທຳນຽມກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ | | |
| 1 | ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃຫ້ເກັບຕາມມູນຄ່າການສົ່ງອອກ | | |
| 1.1 | ແຕ່ 10.000 ໂດລາສະຫະລັດ ລົງມາ | ຄັ້ງ | 40.000 |
| 1.2 | ແຕ່ 10.001 - 30.000 ໂດລາສະຫະລັດ | ຄັ້ງ | 60.000 |
| 1.3 | ແຕ່ 30.001 - 60.000 ໂດລາສະຫະລັດ | ຄັ້ງ | 80.000 |
| 1.4 | 60.000 ໂດລາສະຫະລັດ ຂຶ້ນໄປ | ຄັ້ງ | 100.000 |

| | | | |
|---|---|---|---|
| 2 | ການອອກໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ | ຄັ້ງ | 300.000 |
| V | ຄ່າທຳນຽມອອກໃບຢັ້ງຢືນສິດທາງດ້ານການຄ້າຂອງຜູ້ຄ້າຕ່າງປະເທດ | ຄັ້ງ | 100.000 |
| VI | ຄ່າທຳນຽມ ຂໍຈົດທະບຽນການປະດິດສ້າງ , ການອອກ ແລະ ຮັກສາອາຍຸການ ສິດທິບັດ | | |
| 1 | ການຂໍຈົດທະບຽນການປະດິດສ້າງ | ສິດທິບັດ | 300.000 |
| 2 | ການອອກໃບຢັ້ງຢືນການອະນຸມັດສິດທິບັດ | ສິດທິບັດ | 1.000.000 |
| 3 | ຄ່າທຳນຽມ ການຮັກສາອາຍຸການຂອງສິດທິບັດ<br>ສິດທິບັດ ມີອາຍຸການ ປົກປ້ອງ 20 ປີ. ເພື່ອຮັກສາອາຍຸການ ແມ່ນເລີ່ມເກັບແຕ່ປີທີ 5 ເປັນຕົ້ນໄປ | | |
| 3.1 | ປີທີ 5 | ສິດທິບັດ | 200.000 |
| 3.2 | ປີທີ 6 | ສິດທິບັດ | 300.000 |
| 3.3 | ປີທີ 7 | ສິດທິບັດ | 350.000 |
| 3.4 | ປີທີ 8 | ສິດທິບັດ | 400.000 |
| 3.5 | ປີທີ 9 | ສິດທິບັດ | 550.000 |
| 3.6 | ປີທີ 10 | ສິດທິບັດ | 700.000 |
| 3.7 | ປີທີ 11 | ສິດທິບັດ | 900.000 |
| 3.8 | ປີທີ 12 | ສິດທິບັດ | 1.200.000 |
| 3.9 | ປີທີ 13 | ສິດທິບັດ | 1.500.000 |
| 3.10 | ປີທີ 14 | ສິດທິບັດ | 1.800.000 |
| 3.11 | ປີທີ 15 | ສິດທິບັດ | 2.100.000 |
| 3.12 | ປີທີ 16 | ສິດທິບັດ | 2.500.000 |
| 3.13 | ປີທີ 17 | ສິດທິບັດ | 2.900.000 |
| 3.14 | ປີທີ 18 | ສິດທິບັດ | 3.200.000 |
| 3.15 | ປີທີ 19 | ສິດທິບັດ | 3.600.000 |
| 3.16 | ປີທີ 20 | ສິດທິບັດ | 4.000.000 |
| VII | ຄ່າທຳນຽມການຈົດທະບຽນສິ່ງປະດິດ, ການອອກ ແລະ ຮັກສາອາຍຸການອະນຸສິດທິບັດ | | |
| 1 | ການຂໍຈົດທະບຽນສິ່ງປະດິດ | ອະນຸສິດທິບັດ | 200.000 |
| 2 | ການອອກໃບຢັ້ງຢືນ ການອະນຸມັດອະນຸສິດທິບັດ | ອະນຸສິດທິບັດ | 500.000 |
| 3. | ຄ່າທຳນຽມ ການຮັກສາອາຍຸການຂອງອະນຸສິດທິບັດ<br>ອະນຸສິດທິບັດ ມີອາຍຸການປົກປ້ອງ 10 ປີ. ເພື່ອຮັກສາອາຍຸການ ແມ່ນເລີ່ມເກັບແຕ່ປີທີ 2 ເປັນຕົ້ນໄປ | | |
| 3.1 | ປີທີ 2 | ອະນຸສິດທິບັດ | 150.000 |
| 3.2 | ປີທີ 3 | ອະນຸສິດທິບັດ | 200.000 |
| 3.3 | ປີທີ 4 | ອະນຸສິດທິບັດ | 300.000 |
| 3.4 | ປີທີ 5 | ອະນຸສິດທິບັດ | 400.000 |
| 3.5 | ປີທີ 6 | ອະນຸສິດທິບັດ | 500.000 |
| 3.6 | ປີທີ 7 | ອະນຸສິດທິບັດ | 600.000 |
| 3.7 | ປີທີ 8 | ອະນຸສິດທິບັດ | 700.000 |

| | | | |
|---|---|---|---|
| 3.8 | ປີທີ 9 | ອະນຸສິດທິບັດ | 800.000 |
| 3.9 | ປີທີ 10 | ອະນຸສິດທິບັດ | 900.000 |
| VIII | ຄ່າທຳນຽມການຈົດທະບຽນແບບອຸດສາຫະກຳ | | |
| 1 | ການຂໍຈົດທະບຽນແບບອຸດສາຫະກຳ | ແບບອຸດສາຫະກຳ | 400.000 |
| 2 | ຄ່າທຳນຽມການຮັກສາອາຍຸການແບບອຸດສາຫະກຳ<br>ແບບອຸດສາຫະກຳມີອາຍຸການປົກປ້ອງ 15 ປີ. ເພື່ອຮັກສາອາຍຸການແມ່ນເລີ່ມເກັບແຕ່ປີທີ 6 ເປັນຕົ້ນໄປ | | |
| 2.1 | ປີທີ 6 ຫາ ປີທີ 10 | ແບບອຸດສາຫະກຳ | 800.000 |
| 2.2 | ປີທີ 11 ຫາ ປີທີ 15 | ແບບອຸດສາຫະກຳ | 1.000.000 |
| IX | ຄ່າທຳນຽມຈົດທະບຽນເຄື່ອງໝາຍການຄ້າ (ມີອາຍຸປົກປ້ອງ 10 ປີ. ສາມາດຕໍ່ອາຍຸການໄດ້ເທື່ອລະ10 ປີ) | | |
| 1 | ຄ່າທຳນຽມຈົດທະບຽນເຄື່ອງໝາຍການຄ້າ | | |
| 1.1 | ການຂໍຈົດທະບຽນເຄື່ອງໝາຍການຄ້າ | ໝວດ | 800.000 |
| 1.2 | ການຂໍຕໍ່ອາຍຸການປົກປ້ອງເຄື່ອງໝາຍການຄ້າ | ໝວດ | 800.000 |
| 2 | ຄ່າທຳນຽມການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍໂດຍຜ່ານລະບົບມາດຣິດ | | |
| 2.1 | ການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍໂດຍຜ່ານລະບົບມາດຣິດ | ໝວດ | 800.000 |
| 2.2 | ການຂໍຕໍ່ອາຍຸການປົກປ້ອງເຄື່ອງໝາຍການຄ້າໂດຍຜ່ານລະບົບມາດຣິດ | ໝວດ | 800.000 |
| <u>ໝາຍເຫດ</u>: ອົງການຊັບສິນທາງປັນຍາໂລກ ເປັນຜູ້ເກັບຄ່າທຳນຽມດັ່ງກ່າວ ແລ້ວໂອນເຂົ້າບັນຊີເງິນຝາກຂອງກົມຊັບສິນທາງປັນຍາທີ່ ທະນາຄານ ໃນ ສປປ ລາວ. | | | |
| X | ຄ່າທຳນຽມຈົດທະບຽນ ແລະ ຮັກສາອາຍຸການແບບຜັງວົງຈອນລວມ | | |
| 1 | ຄ່າທຳນຽມການຈົດທະບຽນແບບຜັງວົງຈອນລວມ | | |
| 1.1 | ການຂໍຈົດທະບຽນແບບຜັງວົງຈອນລວມ | ແບບຜັງວົງຈອນລວມ | 400.000 |
| 2 | ຄ່າທຳນຽມ ການຮັກສາອາຍຸການແບບຜັງວົງຈອນລວມ<br>ແບບຜັງວົງຈອນລວມມີອາຍຸການປົກປ້ອງ 12 ປີ. ເພື່ອຮັກສາອາຍຸການແມ່ນ ເລີ່ມເກັບແຕ່ປີທີ 3 ເປັນຕົ້ນໄປ | | |
| 2.1 | ປີທີ 3 | ແບບຜັງວົງຈອນລວມ | 250.000 |
| 2.2 | ປີທີ 4 | ແບບຜັງວົງຈອນລວມ | 300.000 |
| 2.3 | ປີທີ 5 | ແບບຜັງວົງຈອນລວມ | 350.000 |
| 2.4 | ປີທີ 6 | ແບບຜັງວົງຈອນລວມ | 400.000 |

| | | | |
|---|---|---|---|
| 2.5 | ປີທີ 7 | ແບບຜັງວົງ ຈອນລວມ | 450.000 |
| 2.6 | ປີທີ 8 | ແບບຜັງວົງ ຈອນລວມ | 500.000 |
| 2.7 | ປີທີ 9 | ແບບຜັງວົງ ຈອນລວມ | 600.000 |
| 2.8 | ປີທີ 10 | ແບບຜັງວົງ ຈອນລວມ | 700.000 |
| 2.9 | ປີທີ 11 | ແບບຜັງວົງ ຈອນລວມ | 850.000 |
| 2.10 | ປີທີ 12 | ແບບຜັງວົງ ຈອນລວມ | 1.000.000 |
| XI | ຄ່າທຳນຽມ ການຈົດທະບຽນ ແລະ ການອອກໃບຢັ້ງຢືນຖິ່ນກຳເນີດ | | |
| 1 | ຂໍການຈົດທະບຽນຖິ່ນກຳເນີດ | ຖິ່ນກຳເນີດ | 800.000 |
| 2 | ການອອກໃບຢັ້ງຢືນຖິ່ນກຳເນີດ | ຖິ່ນກຳເນີດ | 400.000 |
| XII | ຄ່າທຳນຽມການຈົດທະບຽນ, ການຮັກສາອາຍຸແລະການປົກປ້ອງພັນພືດໃໝ່ | | |
| 1 | ຄ່າທຳນຽມ ການຈົດທະບຽນພັນພືດໃໝ່ | | |
| 1.1 | ຂໍການຈົດທະບຽນພັນພືດໃໝ່ | ພັນພືດໃໝ່ | 300.000 |
| 1.2 | ການອອກໃບຢັ້ງຢືນພັນພືດໃໝ່ | ພັນພືດໃໝ່ | 400.000 |
| 2 | ຄ່າທຳນຽມ ການຮັກສາອາຍຸພັນພືດໃໝ່.<br>ການຮັກສາອາຍຸການພັນພືດໃໝ່ສຳລັບພືດຢືນຕົ້ນ ຫຼື ຕົ້ນໝາກອະງຸ່ນ ມີອາຍຸການປົກປ້ອງ 25 ປີ. ເພື່ອຮັກສາອາຍຸການ ແມ່ນ ເລີ່ມເກັບແຕ່ ປີທີ 5 ເປັນຕົ້ນໄປ | | |
| 2.1 | ປີທີ 5 | ພັນພືດໃໝ່ | 150.000 |
| 2.2 | ປີທີ 6 | ພັນພືດໃໝ່ | 200.000 |
| 2.3 | ປີທີ 7 | ພັນພືດໃໝ່ | 250.000 |
| 2.4 | ປີທີ 8 | ພັນພືດໃໝ່ | 300.000 |
| 2.5 | ປີທີ 9 | ພັນພືດໃໝ່ | 400.000 |
| 2.6 | ປີທີ 10 | ພັນພືດໃໝ່ | 500.000 |
| 2.7 | ປີທີ 11 | ພັນພືດໃໝ່ | 700.000 |
| 2.8 | ປີທີ 12 | ພັນພືດໃໝ່ | 900.000 |
| 2.9 | ປີທີ 13 | ພັນພືດໃໝ່ | 1.150.000 |
| 2.10 | ປີທີ 14 | ພັນພືດໃໝ່ | 1.400.000 |

| | | | |
|---|---|---|---|
| 2.11 | ປີທີ 15 | ພັນພືດໃໝ່ | 1.650.000 |
| 2.12 | ປີທີ 16 | ພັນພືດໃໝ່ | 1.950.000 |
| 2.13 | ປີທີ 17 | ພັນພືດໃໝ່ | 2.250.000 |
| 2.14 | ປີທີ 18 | ພັນພືດໃໝ່ | 2.550.000 |
| 2.15 | ປີທີ 19 | ພັນພືດໃໝ່ | 2.850.000 |
| 2.16 | ປີທີ 20 | ພັນພືດໃໝ່ | 3.250.000 |
| 2.17 | ປີທີ 21 | ພັນພືດໃໝ່ | 3.550.000 |
| 2.18 | ປີທີ 22 | ພັນພືດໃໝ່ | 3.850.000 |
| 2.19 | ປີທີ 23 | ພັນພືດໃໝ່ | 4.150.000 |
| 2.20 | ປີທີ 24 | ພັນພືດໃໝ່ | 4.450.000 |
| 2.21 | ປີທີ 25 | ພັນພືດໃໝ່ | 4.750.000 |
| 3 | ການປົກປ້ອງພັນພືດໃໝ່ສໍາລັບພືດທົ່ວໄປມີອາຍຸການປົກປ້ອງ 20 ປີ. ເພື່ອຮັກສາອາຍຸການ ແມ່ນ ເລີ່ມເກັບແຕ່ປີທີ 5 ເປັນຕົ້ນໄປ | | |
| 3.1 | ປີທີ 5 | ພັນພືດໃໝ່ | 150.000 |
| 3.2 | ປີທີ 6 | ພັນພືດໃໝ່ | 200.000 |
| 3.3 | ປີທີ 7 | ພັນພືດໃໝ່ | 250.000 |
| 3.4 | ປີທີ 8 | ພັນພືດໃໝ່ | 300.000 |
| 3.5 | ປີທີ 9 | ພັນພືດໃໝ່ | 400.000 |
| 3.6 | ປີທີ 10 | ພັນພືດໃໝ່ | 500.000 |
| 3.7 | ປີທີ 11 | ພັນພືດໃໝ່ | 700.000 |
| 3.8 | ປີທີ 12 | ພັນພືດໃໝ່ | 900.000 |
| 3.9 | ປີທີ 13 | ພັນພືດໃໝ່ | 1.150.000 |
| 3.10 | ປີທີ 14 | ພັນພືດໃໝ່ | 1.400.000 |
| 3.11 | ປີທີ 15 | ພັນພືດໃໝ່ | 1.650.000 |
| 3.12 | ປີທີ 16 | ພັນພືດໃໝ່ | 1.950.000 |
| 3.13 | ປີທີ 17 | ພັນພືດໃໝ່ | 2.250.000 |
| 3.14 | ປີທີ 18 | ພັນພືດໃໝ່ | 2.550.000 |
| 3.15 | ປີທີ 19 | ພັນພືດໃໝ່ | 2.850.000 |
| 3.16 | ປີທີ 20 | ພັນພືດໃໝ່ | 3.250.000 |
| XIII | ຄ່າທໍານຽມ ການປັບໃໝສໍາລັບການລະເມີດສິດຊັບສິນທາງປັນຍາ | | |
| 1 | ການລະເມີດໂດຍເຈດຕະນາ ຫຼື ດ້ອຍຄວາມບໍ່ລະມັດລະວັງເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ | ສ່ວນຮ້ອຍ (%) | ປັບໃໝ 1% ຂອງມູນຄ່າຄວາມເສຍ |

| | | | |
|---|---|---|---|
| | | | ຫາຍທີ່ໄດ້ກໍ່ຂຶ້ນ |
| 2 | ການລະເມີດເປັນຄັ້ງທີສອງໂດຍເຈດຕະນາ ຫຼື ເປັນການກະທຳທີ່ເປັນອາຈິນ | ສ່ວນຮ້ອຍ (%) | ປັບໃໝ 5% ຂອງມູນຄ່າຄວາມເສຍຫາຍທີ່ໄດ້ກໍ່ຂຶ້ນ |
| XIV | ຄ່າທຳນຽມ ການພິຈາລະນາຄືນໃໝ່ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່ | | |
| 1 | ການຂໍພິຈາລະນາຄືນໃໝ່ ກ່ຽວກັບການແຈ້ງປະຕິເສດຄຳຮ້ອງຂໍສິດທິບັດ | ຄຳສະເໜີ | 100.000 |
| 2 | ການຂໍພິຈາລະນາຄືນໃໝ່ ກ່ຽວກັບການແຈ້ງປະຕິເສດຄຳຮ້ອງຂໍອະນຸສິດທິບັດ | ຄຳສະເໜີ | 100.000 |
| 3 | ການຂໍພິຈາລະນາຄືນໃໝ່ ກ່ຽວກັບການແຈ້ງປະຕິເສດການຈົດທະບຽນ ແບບອຸດສາຫະກຳ | ຄຳສະເໜີ | 100.000 |
| 4 | ການຂໍພິຈາລະນາຄືນໃໝ່ ກ່ຽວກັບການແຈ້ງປະຕິເສດການຈົດທະບຽນ ເຄື່ອງໝາຍການຄ້າ | ຄຳສະເໜີ | 100.000 |
| 5 | ການຂໍພິຈາລະນາຄືນໃໝ່ ກ່ຽວກັບການແຈ້ງປະຕິເສດການຈົດທະບຽນ ແບບຜັງວົງຈອນລວມ | ຄຳສະເໜີ | 100.000 |
| 6 | ການຂໍພິຈາລະນາຄືນໃໝ່ ກ່ຽວກັບການແຈ້ງປະຕິເສດການຈົດທະບຽນ ຖິ່ນກຳເນີດ | ຄຳສະເໜີ | 100.000 |
| 7 | ການຂໍພິຈາລະນາຄືນໃໝ່ ກ່ຽວກັບການແຈ້ງປະຕິເສດການຈົດທະບຽນ ພັນພືດໃໝ່ | ຄຳສະເໜີ | 100.000 |
| XV | ຄ່າທຳນຽມ ການສະເໜີແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ: | | |
| 1 | ສິດທິບັດ | ຄຳສະເໜີ | 400.000 |
| 2 | ອະນຸສິດທິບັດ | ຄຳສະເໜີ | 400.000 |
| 3 | ແບບອຸດສາຫະກຳ | ຄຳສະເໜີ | 400.000 |
| 4 | ແບບຜັງວົງຈອນລວມ | ຄຳສະເໜີ | 400.000 |
| 5 | ເຄື່ອງໝາຍການຄ້າ | ຄຳສະເໜີ | 400.000 |
| 6 | ຄວາມລັບທາງການຄ້າ | ຄຳສະເໜີ | 400.000 |
| 7 | ຖິ່ນກຳເນີດ | ຄຳສະເໜີ | 400.000 |
| 8 | ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ | ຄຳສະເໜີ | 400.000 |
| 9 | ພັນພືດໃໝ່ | ຄຳສະເໜີ | 400.000 |
| XVI | ຄ່າທຳນຽມ ວຽກງານມາດຕະຖານ ແລະ ຄຸນນະພາບ | | |
| 1 | ຄ່າທຳນຽມຂຶ້ນທະບຽນຜະລິດຕະພັນສິນຄ້າ | | |
| 1.1 | ໃບຄຳຮ້ອງ | ຜະລິດຕະພັນ | 5.000 |

| | | | |
|---|---|---|---|
| 1.2 | ໃບຢັ້ງຢືນຂຶ້ນທະບຽນຄຸນນະພາບຜະລິດຕະພັນສິນຄ້າ | ຜະລິດຕະພັນ | 50.000 |
| 2 | ຄ່າທຳນຽມ ການຈົດທະບຽນຮັບຮອງລະບົບມາດຕະຖານສາກົນ (ISO) | | |
| 2.1 | ໃບຄຳຮ້ອງ | ຄຳຮ້ອງ | 5.000 |
| 2.2 | ໃບຢັ້ງຢືນຮັບຮອງລະບົບມາດຕະຖານສາກົນ (ISO ) | ຄຳຮ້ອງ | 50.000 |
| 3 | ຄ່າທຳນຽມ ກວດກາຄຸນນະພາບຜະລິດຕະພັນສິນຄ້າ | | |
| 3.1 | ໃບຄຳຮ້ອງ | ຜະລິດຕະພັນ | 5.000 |
| 3.2 | ໃບຢັ້ງຢືນກວດຄຸນນະພາບຜະລິດຕະພັນສິນຄ້າ | ຜະລິດຕະພັນ | 50.000 |
| 4 | ຄ່າທຳນຽມ ນຳໃຊ້ກາໝາຍມາດຕະຖານແຫ່ງຊາດ | | |
| 4.1 | ໃບຄຳຮ້ອງ | ຜະລິດຕະພັນ | 5.000 |
| 4.2 | ໃບຢັ້ງຢືນການນຳໃຊ້ກາໝາຍມາດຕະຖານ | ຜະລິດຕະພັນ | 50.000 |
| 5 | ຄ່າທຳນຽມ ການສະໝັກເປັນສະມາຊິກກົດລະຫັດສາກົນ Barcode ແລະ RFID | | |
| 5.1 | ໃບຄຳຮ້ອງ | ຄຳຮ້ອງ | 5.000 |
| 5.2 | ໃບຢັ້ງຢືນກົດລະຫັດສາກົນ Barcode ແລະ RFID | ຄຳຮ້ອງ | 50.000 |
| XVII | ຄ່າທຳນຽມ ການຂຶ້ນທະບຽນການກວດສອບອຸປະກອນວັດແທກ | | |
| 1 | ຄຳຮ້ອງ | ປີ | 5.000 |
| 2 | ໜ່ວຍນ້ຳໜັກ 1 mg – 500 mg | ປີ | 20.000 |
| | ໜ່ວຍນ້ຳໜັກ 1 g – 500 g | ປີ | 30.000 |
| | ໜ່ວຍນ້ຳໜັກ 1 kg - 5 kg | ປີ | 20.000 |
| | ໜ່ວຍນ້ຳໜັກ 10 kg - 50 kg | ປີ | 40.000 |
| | ໜ່ວຍນ້ຳໜັກແຕ່ 100 kg ຂຶ້ນໄປ | ປີ | 100.000 |
| 3 | ຈົດທະບຽນຄັ້ງດຽວຕະຫຼອດອາຍຸການນຳໃຊ້ | | |
| 3.1 | ຊິງຊັ່ງລະບົບກົນລະສາດ (Analog) | ເຄື່ອງ | |
| | ຊິງຊັ່ງນ້ຳໜັກແຕ່ 5 kg ລົງມາ | ເຄື່ອງ | 10.000 |
| | ຊິງຊັ່ງນ້ຳໜັກຫຼາຍກວ່າ 5 ຫາ 15 kg | ເຄື່ອງ | 15.000 |
| | ຊິງຊັ່ງນ້ຳໜັກຫຼາຍກວ່າ 15 ຫາ 50 kg | ເຄື່ອງ | 20.000 |
| | ຊິງຊັ່ງນ້ຳໜັກຫຼາຍກວ່າ 50 ຫາ 100 kg | ເຄື່ອງ | 25.000 |
| | ຊິງຊັ່ງນ້ຳໜັກຫຼາຍກວ່າ 100 ຫາ 1.000 kg | ເຄື່ອງ | 30.000 |
| | ຊິງຊັ່ງນ້ຳໜັກຫຼາຍກວ່າ 1.000 kg ຂຶ້ນໄປໃຫ້ບວກເພີ່ມອີກ 10.000 ກີບ/1.000 kg | ເຄື່ອງ | 35.000 |
| 3.2 | ຊິງຊັ່ງແບບເອເລັກໂຕຣນິກ | | |
| | ຊິງຊັ່ງນ້ຳໜັກແຕ່ 1 kg ລົງມາ | ເຄື່ອງ | 20.000 |
| | ຊິງຊັ່ງນ້ຳໜັກຫຼາຍກວ່າ 1 ຫາ 10 kg | ເຄື່ອງ | 25.000 |

| | | | |
|---|---|---|---|
| | ຊີງຊັ່ງນ້ຳໜັກຫຼາຍກວ່າ 10 ຫາ 20 kg | ເຄື່ອງ | 30.000 |
| | ຊີງຊັ່ງນ້ຳໜັກຫຼາຍກວ່າ 21 ຫາ 100 kg | ເຄື່ອງ | 35.000 |
| | ຊີງຊັ່ງນ້ຳໜັກຫຼາຍກວ່າ 100 ຫາ 500 kg | ເຄື່ອງ | 40.000 |
| | ຊີງຊັ່ງນ້ຳໜັກຫຼາຍກວ່າ 500 ຫາ 2.000 kg | ເຄື່ອງ | 45.000 |
| | ຊີງຊັ່ງນ້ຳໜັກຫຼາຍກວ່າ 2.000 ຫາ 10.000 kg | ເຄື່ອງ | 50.000 |
| | ຊີງຊັ່ງນ້ຳໜັກຫຼາຍກວ່າ 10.000 kg ຂຶ້ນໄປໃຫ້ບວກເພີ່ມອີກ 50.000 ກີບ/1.000 kg | ເຄື່ອງ | 100.000 |
| 3.3 | ແຕ່ລະຂະໜາດຂອງຖັງພອງ | | |
| | ບໍລິມາດແຕ່ 1 ລິດລົງມາ | ເຄື່ອງ | 20.000 |
| | ບໍລິມາດແຕ່ 1 ລິດ ຫາ 5 ລິດ | ເຄື່ອງ | 30.000 |
| | ບໍລິມາດຫຼາຍກວ່າ 5 ລິດ ຫາ 20 ລິດ | ເຄື່ອງ | 70.000 |
| | ບໍລິມາດຫຼາຍກວ່າ 20 ລິດ ຫາ 100 ລິດ | ເຄື່ອງ | 80.000 |
| | ບໍລິມາດຫຼາຍກວ່າ 100 ລິດ ຫາ 1.000 ລິດ | ເຄື່ອງ | 90.000 |
| | ບໍລິມາດຫຼາຍກວ່າ 1.000 ລິດຂຶ້ນໄປໃຫ້ຄິດໄລ່ 30.000 ກີບ/1.000 ລິດ | ເຄື່ອງ | 100.000 |
| 3.4 | ເຄື່ອງວັດແທກຄວາມແຂງໂລຫະທົ່ວໄປ | ເຄື່ອງ | 200.000 |
| 3.5 | ເຄື່ອງວັດແທກວັດຖຸມີຄ່າ (ຄຳ, ເງິນ, ປະລາຕີນັມ, ເພັດ, ພອຍ) | ເຄື່ອງ | 200.000 |
| 3.6 | ເຄື່ອງແທກຂະໜາດແຕ່ລະຂະໜາດ | | |
| | ຂະໜາດຄວາມຍາວແຕ່ 1 ແມັດ ລົງມາ | ເຄື່ອງ | 2.000 |
| | ຂະໜາດຄວາມຍາວຫຼາຍກວ່າ 1 ແມັດ ຫາ 5 ແມັດ | ເຄື່ອງ | 5.000 |
| | ຂະໜາດຄວາມຍາວຫຼາຍກວ່າ 5 ແມັດ ຫາ 10 ແມັດ | ເຄື່ອງ | 10.000 |
| | ຂະໜາດຄວາມຍາວຫຼາຍກວ່າ 10 ແມັດ ຫາ 50 ແມັດ | ເຄື່ອງ | 20.000 |
| | ຂະໜາດຄວາມຍາວຫຼາຍກວ່າ 50 ແມັດ ຂຶ້ນໄປໃຫ້ ຄິດໄລ່ເພີ່ມ 20.000 ກີບ/1 ແມັດ | ເຄື່ອງ | |
| | ໄມໂຄຼແມດເຕີ | | |
| | ແບບທຳມະດາ | ເຄື່ອງ | 10.000 |
| | ແບບດີຈີຕອນ | ເຄື່ອງ | 15.000 |
| 3.7 | ຫົວປ້ຳຈຳໜ່າຍນ້ຳມັນເຊື້ອໄຟ ທີ່ໃຊ້ໄຟຟ້າ | ເຄື່ອງ | 100.000 |
| | ຫົວປ້ຳຈຳໜ່າຍນ້ຳມັນເຊື້ອໄຟ ທີ່ບໍ່ໃຊ້ໄຟຟ້າ | ເຄື່ອງ | 50.000 |
| 3.8 | ຫົວຈ່າຍນ້ຳມັນເຊື້ອໄຟທີ່ຢູ່ສາງນ້ຳມັນ | ເຄື່ອງ | 200.000 |
| 3.9 | ໝໍ້ວັດແທກໄຟຟ້າຊະນິດ 01 ຟາ | ເຄື່ອງ | 1.000 |
| | ໝໍ້ວັດແທກໄຟຟ້າຊະນິດ 03 ຟາ | ເຄື່ອງ | 1.500 |

| | | | |
|---|---|---|---|
| | ໝໍ້ແປງກະແສ 0,4 KVA | ເຄື່ອງ | 20.000 |
| | ໝໍ້ແປງກະແສ 22 KVA | ເຄື່ອງ | 50.000 |
| | ໝໍ້ແປງແຮງດັນ 22 KVA | ເຄື່ອງ | 50.000 |
| | ໝໍ້ແປງໄຟຂະໜາດ 25 KVA – 100 KVA | ເຄື່ອງ | 100.000 |
| | ໝໍ້ແປງໄຟຂະໜາດ 160 KVA – 250 KVA | ເຄື່ອງ | 150.000 |
| | ໝໍ້ແປງໄຟຂະໜາດ 315 KVA – 500 KVA | ເຄື່ອງ | 200.000 |
| | ໝໍ້ແປງໄຟຂະໜາດ 630 KVA – 1.000 KVA | ເຄື່ອງ | 250.000 |
| | ໝໍ້ແປງໄຟຂະໜາດ 1.250 KVA – 1.500 KVA | ເຄື່ອງ | 300.000 |
| | ໝໍ້ແປງໄຟຂະໜາດ 1.600 KVA – 2.000 KVA | ເຄື່ອງ | 350.000 |
| | ໝໍ້ແປງໄຟຂະໜາດ 2.250 KVA – 3.000 KVA | ເຄື່ອງ | 400.000 |
| | ໝໍ້ແປງໄຟຂະໜາດ 3.500 KVA – 5.000 KVA | ເຄື່ອງ | 450.000 |
| 3.10 | ໝໍ້ວັດແທກນ້ຳປະປາຂະໜາດຕ່າງໆ | | |
| | ແຕ່ 15 ມມ - 25 ມມ | ເຄື່ອງ | 10.000 |
| | ຫຼາຍກວ່າ 25 ມມ - 50 ມມ | ເຄື່ອງ | 15.000 |
| | ຫຼາຍກວ່າ 50 ມມ - 100 ມມ | ເຄື່ອງ | 20.000 |
| | ຫຼາຍກວ່າ 100 ມມ ຂຶ້ນໄປ | ເຄື່ອງ | 25.000 |
| 3.11 | ຄ່າທຳນຽມຈົດທະບຽນເຄື່ອງແທກອຸນຫະພູມ | ເຄື່ອງ | 35.000 |
| 3.12 | ຄ່າທຳນຽມຈົດທະບຽນເຄື່ອງແທກຄວາມຊຸ່ມ | ເຄື່ອງ | 35.000 |
| 3.13 | ຄ່າທຳນຽມຈົດທະບຽນເຄື່ອງແທກຄວາມດັນ | ເຄື່ອງ | 35.000 |
| 3.14 | ລົດບັນທຸກນ້ຳມັນເຊື້ອໄຟ | | |
| | ຂະໜາດບັນຈຸ ແຕ່ 7.000 ລິດລົງມາ | ເຄື່ອງ | 35.000 |
| | ຂະໜາດບັນຈຸ ຫຼາຍກວ່າ 7.000 ຫາ 9.000 ລິດ | ເຄື່ອງ | 40.000 |
| | ຂະໜາດບັນຈຸ ຫຼາຍກວ່າ 9.000 ຫາ 12.000 ລິດ | ເຄື່ອງ | 45.000 |
| | ຂະໜາດບັນຈຸ ຫຼາຍກວ່າ 12.000 ຫາ 16.000 ລິດ | ເຄື່ອງ | 50.000 |
| | ຂະໜາດບັນຈຸ ຫຼາຍກວ່າ 16.000 ຫາ 24.000 ລິດ | ເຄື່ອງ | 55.000 |
| | ຂະໜາດບັນຈຸ ຫຼາຍກວ່າ 24.000 ຫາ 30.000 ລິດ | ເຄື່ອງ | 60.000 |
| | ຂະໜາດບັນຈຸ ຫຼາຍກວ່າ 30.000 ຫາ 35.000 ລິດ | ເຄື່ອງ | 65.000 |
| | ຂະໜາດບັນຈຸ ຫຼາຍກວ່າ 35.000 ຫາ 40.000 ລິດ | ເຄື່ອງ | 70.000 |
| | ຂະໜາດບັນຈຸ ຫຼາຍກວ່າ 40.000 ລິດ ຂຶ້ນໄປ | ເຄື່ອງ | 75.000 |
| 3.15 | ສິນຄ້າຫຸ້ມຫໍ່ທຸກປະເພດ | ຜະລິດຕະພັນ ສິນຄ້າ | 200.000 |

ມາດຕາ 20 **ຄ່າບໍລິການ**

ຄ່າບໍລິການ ຂະແໜງການ ອຸດສາຫະກຳ ແລະ ການຄ້າໃຫ້ຈັດເກັບ ດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| I | **ເອກະສານກ່ຽວກັບການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກສິນຄ້າ** | | |
| 1 | ອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກສິນຄ້າ | ຊຸດ | 10.000 |
| 2 | ອອກບັດນຳໃຊ້ສິດທິພິເສດການຄ້າຊາຍແດນ | ຄັ້ງ | 10.000 |
| 3 | ອອກໃບຢັ້ງຢືນສິນຄ້າຜ່ານແດນ | ຊຸດ | 10.000 |
| 4 | ອອກໃບອະນຸຍາດນຳເຂົ້າສິນຄ້າເພື່ອສົ່ງອອກຄືນ | ຊຸດ | 10.000 |
| 5 | ດັດແກ້ໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ແລະ ການອອກໃບຢັ້ງຢືນໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ | ຊຸດ | 50.000 |
| 6 | ອອກໃບຢັ້ງຢືນແຫຼ່ງທີ່ມາຂອງເພັດພອຍ (ໃບ KPC) | ຊຸດ | 40.000 |
| 7 | ແບບພິມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ | ຊຸດ | 10.000 |
| 8 | ອອກໃບຢັ້ງຢືນສິດທາງດ້ານການຄ້າຂອງຜູ້ຄ້າຕ່າງປະເທດ | ຊຸດ | 2.000.000 |
| II | ຄ່າບໍລິການກ່ຽວກັບທະບຽນວິສາຫະກິດ | | |
| 1 | ພິມຊຸດຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ | ຊຸດ | 20.000 |
| 2 | ພິມຊຸດຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຮຸ້ນສ່ວນສາມັນ, ວິສາຫະກິດຮຸ້ນສ່ວນຈຳກັດ, ລັດວິສາຫະກິດ, ບໍລິສັດມະຫາຊົນ ແລະ ບໍລິສັດຈຳກັດ | ຊຸດ | 100.000 |
| 3 | ອັດສຳເນົາເອກະສານແຈ້ງຂຶ້ນທະບຽນວິສາຫະກິດ | ຊຸດ | 5.000 |
| 4 | ພິມຊຸດຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງສະຫະກອນ | ຊຸດ | 20.000 |
| 5 | ພິມຊຸດຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດບໍລິສັດຈຳກັດຜູ້ດຽວ | ຊຸດ | 80.000 |
| 6 | ພິມໃບຄຳຮ້ອງສະເໜີປ່ຽນແປງເນື້ອໃນທະບຽນວິສາຫະກິດ | ຊຸດ | 20.000 |
| 7 | ພິມໃບຄຳຮ້ອງສະເໜີແຈ້ງຍຸບເລີກວິສາຫະກິດຊົ່ວຄາວ ຫຼື ຖາວອນ | ຊຸດ | 20.000 |
| 8 | ພິມຄຳຮ້ອງສະເໜີສ້າງຕັ້ງສາຂານິຕິບຸກຄົນຕ່າງປະເທດ | ຊຸດ | 100.000 |
| 9 | ພິມໃບທະບຽນວິສາຫະກິດ | ຄັ້ງ | 50.000 |
| 10 | ພິມໜັງສືຮັບຮອງການປ່ຽນແປງເນື້ອໃນທະບຽນວິສາຫະກິດ | ຊຸດ | 50.000 |
| 11 | ລົງທະບຽນສ້າງຕັ້ງສາຂາວິສາຫະກິດພາຍໃນປະເທດ | ຄັ້ງ | 100.000 |
| 12 | ລົງທະບຽນແຈ້ງການຍຸບເລີກວິສາຫະກິດຊົ່ວຄາວ ຫຼື ຖາວອນ | ຄັ້ງ | 50.000 |
| 13 | ລົງທະບຽນສິ້ນສຸດການຊຳລະສະສາງ | ຄັ້ງ | 50.000 |
| III | ບໍລິການອອກໃບອະນຸຍາດດຳເນີນທຸລະກິດ, ດັດແກ້ ຫຼື ອອກໃບອະນຸຍາດດຳເນີນທຸລະກິດຄືນໃໝ່ ໃນກິດຈະການອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ | ຄັ້ງ | 50.000 |
| IV | ໃບຢັ້ງຢືນ ການນຳເຂົ້າເຄື່ອງຈັກ, ວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ ຫຼື ຊິ້ນສ່ວນອື່ນໆ ເພື່ອມາຕິດຕັ້ງ, ຜະລິດ, ປະກອບ ຫຼື ປຸງແຕ່ງ ຢູ່ໃນໂຮງງານ | ສະບັບ | 40.000 |
| V | ບໍລິການໃນການວັດແທກຄຸນນະພາບຂອງໂຮງງານ | | |

| | | | |
|---|---|---|---|
| 1 | ບໍລິການວັດແທກຄຸນນະພາບອາກາດ ທີ່ປ່ອຍອອກຈາກທໍ່ຄວັນຂອງໂຮງງານ | ຄັ້ງ | 200.000 |
| 2 | ບໍລິການວັດແທກຄຸນນະພາບນໍ້າ | | |
| | 1) ຄວາມເປັນກົດ-ດ່າງ pH | ຕົວຢ່າງ | 50.000 |
| | 2) ປະລິມານທີ່ອົກຊີແຊນລະລາຍໃນນໍ້າ DO | ຕົວຢ່າງ | 50.000 |
| | 3) ການຊັກນໍາກະແສໄຟຟ້າຂອງນໍ້າ EC | ຕົວຢ່າງ | 50.000 |
| 3 | ຄ່າບໍລິການວັດແທກສິ່ງແວດລ້ອມໃນສະຖານທີ່ເຮັດວຽກ | | |
| | 1) ປະລິມານຝຸ່ນລະອອງທີ່ກະທົບຕໍ່ກໍາມະກອນ | ຕົວຢ່າງ | 50.000 |
| | 2) ສຽງດັງ | ຕົວຢ່າງ | 50.000 |
| | 3) ແສງສະຫວ່າງ | ຕົວຢ່າງ | 50.000 |
| | 4) ອຸນຫະພູມ | ຕົວຢ່າງ | 50.000 |
| VI | ຄ່າບໍລິການຢັ້ງຢືນເຄມີຜ່ານແດນ | ຄັ້ງ | 40.000 |
| VII | ຄ່າບໍລິການກ່ຽວກັບການປະດິດສ້າງເພື່ອຮັບເອົາສິດທິບັດ: | | |
| 1 | ໃບຄໍາຮ້ອງຂໍຈົດທະບຽນ | ຄໍາຮ້ອງ | 20.000 |
| 2 | ການກວດສອບສໍານວນຄໍາຮ້ອງເບື້ອງຕົ້ນ | ຄໍາຮ້ອງ | 200.000 |
| 3 | ການໃຫ້ຄໍາປຶກສາ | ຄັ້ງ | 100.000 |
| 4 | ການຈັດໝວດ | ໝວດ | 150.000 |
| 5 | ການກວດສອບສໍານວນຄໍາຮ້ອງຂໍກາຍ 50 ໜ້າ ໃຫ້ຄິດໄລ່ເພີ່ມ | ໜ້າ | 20.000 |
| 6 | ການກວດຄົ້ນຂໍ້ມູນກ່ຽວກັບການປະດິດສ້າງ | ການປະດິດສ້າງ | 100.000 |
| 7 | ການຄັດຄ້ານການຈົດທະບຽນ | ການປະດິດສ້າງ | 200.000 |
| 8 | ການດັດແກ້ຄໍາຮ້ອງຂໍຈົດທະບຽນ | ຄໍາຮ້ອງ | 100.000 |
| 9 | ການອອກສໍາເນົາໃບທະບຽນສິດທິບັດ | ຄໍາຮ້ອງ | 100.000 |
| 10 | ການຮັບຮອງສັນຍາການຂໍສິດນໍາໃຊ້ສິດທິບັດ ຫຼື ການໂອນສິດທິບັດ | ສິດທິບັດ | 400.000 |
| 11 | ການປ່ຽນຊື່ຂອງຜູ້ຕາງໜ້າທີ່ຍື່ນຄໍາຮ້ອງຂໍຮັບສິດທິບັດ ຫຼື ການປ່ຽນຊື່ຂອງເຈົ້າຂອງສິດທິບັດ | ຄໍາຮ້ອງ | 400.000 |
| 12 | ການປ່ຽນທີ່ຢູ່ຂອງຜູ້ຕາງໜ້າທີ່ຍື່ນຄໍາຮ້ອງຂໍຮັບສິດທິບັດ ຫຼື ການປ່ຽນທີ່ຢູ່ຂອງເຈົ້າຂອງສິດທິບັດ | ຄໍາຮ້ອງ | 400.000 |
| 13 | ການຂໍລົບລ້າງໂດຍເຈົ້າຂອງການປະດິດສ້າງ | ການປະດິດສ້າງ | 200.000 |
| 14 | ການຂໍລົບລ້າງໂດຍບຸກຄົນອື່ນ | ການປະດິດສ້າງ | 600.000 |
| 15 | ການຢັ້ງຢືນຕ່າງໆກ່ຽວກັບການຈົດທະບຽນ | ສະບັບ | 100.000 |
| 16 | ຮຽກຮ້ອງສິດການປົກປ້ອງທີ່ກາຍ 15 ຂໍ້ ໃຫ້ຄິດໄລ່ເພີ່ມ | ໜຶ່ງຂໍ້ | 50.000 |
| 17 | ການພິຈາລະນາພົມກວດສອບການປະດິດສ້າງ | ຄໍາຮ້ອງ | 1.000.000 |

| | | | |
|---|---|---|---|
| 18 | ການກວດສອບເນື້ອໃນລະອຽດຂອງການປະດິດສ້າງ ແມ່ນ ຂຶ້ນກັບມູນຄ່າຕົວຈິງຂອງການກວດສອບທີ່ເຈົ້າຂອງຄໍາຮ້ອງຂໍ ຈະຕ້ອງຈ່າຍໃຫ້ຫ້ອງການກວດສອບທີ່ກ່ຽວຂ້ອງຂອງຕ່າງປະເທດໃດໜຶ່ງທີ່ສົ່ງໄປກວດສອບ | | |
| VIII | ຄ່າບໍລິການເພື່ອຮັກສາອາຍຸການຂອງສິດທິບັດ: | | |
| 1 | 4 ປີທໍາອິດ | ສິດທິບັດ | 200.000 |
| 2 | ປີທີ 5 | ສິດທິບັດ | 400.000 |
| 3 | ປີທີ 6 | ສິດທິບັດ | 400.000 |
| 4 | ປີທີ 7 | ສິດທິບັດ | 400.000 |
| 5 | ປີທີ 8 | ສິດທິບັດ | 400.000 |
| 6 | ປີທີ 9 | ສິດທິບັດ | 400.000 |
| 7 | ປີທີ 10 | ສິດທິບັດ | 400.000 |
| 8 | ປີທີ 11 | ສິດທິບັດ | 400.000 |
| 9 | ປີທີ 12 | ສິດທິບັດ | 400.000 |
| 10 | ປີທີ 13 | ສິດທິບັດ | 400.000 |
| 11 | ປີທີ 14 | ສິດທິບັດ | 400.000 |
| 12 | ປີທີ 15 | ສິດທິບັດ | 400.000 |
| 13 | ປີທີ 16 | ສິດທິບັດ | 400.000 |
| 14 | ປີທີ 17 | ສິດທິບັດ | 400.000 |
| 15 | ປີທີ 18 | ສິດທິບັດ | 400.000 |
| 16 | ປີທີ 19 | ສິດທິບັດ | 400.000 |
| 17 | ປີທີ 20 | ສິດທິບັດ | 400.000 |
| IX | ຄ່າບໍລິການກ່ຽວກັບສິ່ງປະດິດ | | |
| 1 | ໃບຄໍາຮ້ອງຂໍຈົດທະບຽນ | ຄໍາຮ້ອງ | 20.000 |
| 2 | ການກວດສອບສໍານວນຄໍາຮ້ອງເບື້ອງຕົ້ນ | ຄໍາຮ້ອງ | 100.000 |
| 3 | ການໃຫ້ຄໍາປຶກສາ | ຄໍາຮ້ອງຄັ້ງ | 50.000 |
| 4 | ການຈັດໝວດ | ໝວດ | 100.000 |
| 5 | ການກວດສອບສໍານວນຄໍາຮ້ອງກາຍ 40 ໜ້າໃຫ້ຄິດໄລ່ເພີ່ມ | ໜ້າ | 10.000 |
| 6 | ການສະເໜີຂໍກວດສອບເນື້ອໃນ | ຄໍາຮ້ອງ | 100.000 |
| 7 | ການກວດຄົ້ນຂໍ້ມູນກ່ຽວກັບການປະດິດ | ສິ່ງປະດິດ | 100.000 |
| 8 | ການຄັດຄ້ານການຈົດທະບຽນ | ສິ່ງປະດິດ | 100.000 |
| 9 | ການດັດແກ້ຄໍາຮ້ອງຂໍຈົດທະບຽນ | ຄໍາຮ້ອງ | 100.000 |
| 10 | ການອອກສໍາເນົາໃບອະນຸສິດທິບັດ | ສະບັບ | 100.000 |
| 11 | ການຮັບຮອງສັນຍາການຂໍສິດນໍາໃຊ້ອະນຸສິດທິບັດ ຫຼື ການໂອນອະນຸສິດທິບັດ | ອານຸສິດທິບັດ | 400.000 |
| 12 | ການປ່ຽນຊື່ຂອງຜູ້ຕາງໜ້າທີ່ຍື່ນຄໍາຮ້ອງຂໍຮັບອະນຸສິດທິບັດ ຫຼື ການປ່ຽນຊື່ຂອງເຈົ້າຂອງອານຸສິດທິບັດ | ຄໍາຮ້ອງ | 400.000 |

| | | | |
|---|---|---|---|
| 13 | ການປ່ຽນທີ່ຢູ່ຂອງຜູ້ຕາງໜ້າທີ່ຍື່ນຄໍາຮ້ອງຂໍຮັບອະນຸສິດທິບັດ ຫຼື ການປ່ຽນທີ່ຢູ່ຂອງເຈົ້າຂອງອະນຸສິດທິບັດ | ຄໍາຮ້ອງ | 400.000 |
| 14 | ການຂໍລົບລ້າງໂດຍເຈົ້າຂອງສິ່ງປະດິດ | ສິ່ງປະດິດ | 200.000 |
| 15 | ການຂໍລົບລ້າງໂດຍບຸກຄົນອື່ນ | ສິ່ງປະດິດ | 500.000 |
| 16 | ການຢັ້ງຢືນຕ່າງໆກ່ຽວກັບການຈົດທະບຽນ | ສະບັບ | 100.000 |
| 17 | ຮຽກຮ້ອງສິດການປົກປ້ອງທີ່ກາຍ 15 ຂໍ້ ໃຫ້ຄິດໄລ່ເພີ່ມ | ໜຶ່ງຂໍ້ | 50.000 |
| 18 | ການກວດສອບເນື້ອໃນລະອຽດຂອງສິ່ງປະດິດ ແມ່ນຂຶ້ນກັບມູນຄ່າຕົວຈິງຂອງການກວດສອບ ທີ່ເຈົ້າຂອງຄໍາຮ້ອງຂໍຈະຕ້ອງຈ່າຍໃຫ້ຫ້ອງການກວດສອບທີ່ກ່ຽວຂ້ອງ ຂອງຕ່າງປະເທດໃດໜຶ່ງທີ່ສົ່ງໄປກວດສອບ | | |
| X | ຄ່າບໍລິການເພື່ອຮັກສາອາຍຸການປົກປ້ອງ ອະນຸສິດທິບັດ: | | |
| 1 | ປີທີ 1 | ອະນຸສິດທິບັດ | 100.000 |
| 2 | ປີທີ 2 | ອະນຸສິດທິບັດ | 200.000 |
| 3 | ປີທີ 3 | ອະນຸສິດທິບັດ | 200.000 |
| 4 | ປີທີ 4 | ອະນຸສິດທິບັດ | 200.000 |
| 5 | ປີທີ 5 | ອະນຸສິດທິບັດ | 200.000 |
| 6 | ປີທີ 6 | ອະນຸສິດທິບັດ | 200.000 |
| 7 | ປີທີ 7 | ອະນຸສິດທິບັດ | 200.000 |
| 8 | ປີທີ 8 | ອະນຸສິດທິບັດ | 200.000 |
| 9 | ປີທີ 9 | ອະນຸສິດທິບັດ | 200.000 |
| 10 | ປີທີ 10 | ອະນຸສິດທິບັດ | 200.000 |
| XI | ຄ່າບໍລິການ ກ່ຽວກັບແບບອຸດສາຫະກໍາ: | | |
| 1 | ໃບຄໍາຮ້ອງຂໍຈົດທະບຽນ | ຄໍາຮ້ອງ | 20.000 |
| 2 | ການກວດສອບສໍານວນຄໍາຮ້ອງເບື້ອງຕົ້ນ | ຄໍາຮ້ອງ | 100.000 |
| 3 | ການໃຫ້ຄໍາປຶກສາ | ຄໍາຮ້ອງ/ຄັ້ງ | 100.000 |
| 4 | ການຈັດໝວດ | ໝວດ | 50.000 |
| 5 | ການກວດສອບສໍານວນຄໍາຮ້ອງກາຍ 30 ໜ້າໃຫ້ຄິດ ໄລ່ເພີ່ມ | ໜ້າ | 10.000 |
| 6 | ການກວດຄົ້ນຂໍ້ມູນກ່ຽວກັບແບບອຸດສາຫະກໍາ | ແບບອຸດສາຫະກໍາ | 100.000 |
| 7 | ການຄັດຄ້ານການຈົດທະບຽນ | ແບບອຸດສາຫະກໍາ | 200.000 |
| 8 | ການດັດແກ້ຄໍາຮ້ອງຂໍຈົດທະບຽນ | ຄໍາຮ້ອງ | 100.000 |
| 9 | ການອອກສໍາເນົາໃບທະບຽນແບບອຸດສາຫະກໍາ | ສະບັບ | 100.000 |
| 10 | ການຮັບຮອງສັນຍາການຂໍສິດນໍາໃຊ້ແບບອຸດສາຫະກໍາ ຫຼື ການໂອນແບບອຸດສາຫະກໍາ | ແບບອຸດສາຫະກໍາ | 400.000 |
